ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

====================

ສະພາແຫ່ງຊາດ ເລກທີ 11 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2007

# ກົດໝາຍ
# ວ່າດ້ວຍກິລາ-ກາຍຍະກຳ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍກິລາ-ກາຍຍະກຳ ສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະ ການ ກ່ຽວກັບ ການສົ່ງເສີມ, ການພັດທະນາ, ການຄຸ້ມຄອງ, ການບໍລິຫານ ກິລາ-ກາຍຍະກຳ ເພື່ອ ເຮັດໃຫ້ວຽກ ງານດັ່ງກ່າວ ມີການຂະຫຍາຍຕົວ, ກ້າວໜ້າ, ເສີມສ້າງບັນຍາກາດສົດໃສ ຢູ່ໃນສັງຄົມ, ເຮັດໃຫ້ພົນລະ ເມືອງລາວ ມີສຸຂະພາບເຂັ້ມແຂງທາງດ້ານຮ່າງກາຍ ແລະ ຈິດໃຈ, ມີນ້ຳໃຈກິລາ ທີ່ຜ່ອງໃສ, ສ້າງສະຕິຊາດ, ສາມາດປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ, ຍົກຖານະບົດບາດຂອງຊາດ, ເພີ່ມທະ ວີຄວາມສາມັກຄີ, ມິດຕະພາບ, ສັນຕິພາບ, ການຮ່ວມມືກັບບັນດາ ປະເທດຢູ່ພາກພື້ນ ແລະ ສາກົນ ແນໃສ່ ຮັບໃຊ້ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

**ມາດຕາ 2. ກິລາ-ກາຍຍະກຳ**

ກິລາ-ກາຍຍະກຳ ແມ່ນ ຂະບວນການເຄື່ອນໄຫວກິດຈະກຳຕ່າງໆ ໃນການຝຶກແອບ, ການ ແຂ່ງຂັນ, ການສະແດງ, ການແລກປ່ຽນ ແບບບຸກຄົນ, ລວມໝູ່ ທີ່ມີສິນລະປະ, ລວດລາຍສະເພາະ ເພື່ອເຮັດ ໃຫ້ຮ່າງກາຍແຂງແຮງ, ສວຍງາມ, ຈິດໃຈເບີກບານ, ສະໝອງໄດ້ຮັບການພັດທະນາ, ສ້າງຄວາມຊຳນານ, ປະສົບການທາງດ້ານເຕັກນິກ, ຍຸດທະວິທີ ເປັນທີ່ນິຍົມຊົມຊອບຂອງມວນຊົນ ກ້າວໄປເຖິງການສະແດງ, ການແຂ່ງຂັນ ເພື່ອຄວາມເປັນເລີດ ນຳກຽດສັກສີ ແລະ ຊື່ສຽງມາສູ່ ຂະແໜງການ, ທ້ອງຖິ່ນ, ປະເທດຊາດ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ກິລາ-ກາຍຍະກຳສະໝັກຫລິ້ນ ໝາຍເຖິງ** ການດຳເນີນການຝຶກແອບ, ການສະແດງ, ການ ແລກປ່ຽນ, ການແຂ່ງຂັນ ຂອງບຸກຄົນ ຫຼື ການຈັດຕັ້ງມວນຊົນທົ່ວໄປ ເພື່ອຄວາມມ່ວນຊື່ນ,

ຄວາມສາມັກຄີ, ມິດຕະພາບ ໂດຍບໍ່ຍຶດຖືເປັນອາຊີບ ແຕ່ປະຕິບັດຕາມກົດລະບຽບ ແລະ ກະຕິກາ ທີ່ແນ່ນອນຂອງກິລາ-ກາຍຍະກໍາ;

2. **ກິລາ-ກາຍຍະກຳອາຊີບ ໝາຍເຖິງ** ການດຳເນີນການຝຶກແອບ, ການສະແດງ, ການແຂ່ງຂັນຂອງ ບຸກຄົນ ຫຼື ການຈັດຕັ້ງທີ່ຍຶດຖືເປັນອາຊີບ ແລະ ປະຕິບັດຕາມກົດລະບຽບ ແລະ ກະຕິກາຂອງກິລາ-ກາຍຍະກຳອາຊີບ;
3. **ນັກກິລາ ໝາຍເຖິງ** ຜູ້ທີ່ໄດ້ຮັບການຄັດເລືອກເຂົ້າຮ່ວມ ຝຶກຊ້ອມ, ສະແດງ, ແຂ່ງຂັນກິລາ-ກາຍຍະກຳປະເພດໃດໜຶ່ງ;
4. **ຄູຝຶກ ໝາຍເຖິງ** ຜູ້ທີ່ມີວິຊາສະເພາະ, ມີຄວາມຮູ້, ຄວາມສາມາດ, ປະສົບການ, ຄວາມຊໍານານ ແລະ ເປັນຜູ້ສິດສອນ, ແນະນໍາ, ຝຶກແອບ ກິລາ-ກາຍຍະກໍາ ປະເພດໃດໜຶ່ງໃຫ້ແກ່ນັກກິລາ ຫຼື ຜູ້ຫຼິ້ນກິລາ-ກາຍຍະກໍາ;
5. **ກຳມະການຕັດສິນ ໝາຍເຖິງ** ຜູ້ທີ່ມີຄວາມຮູ້, ມີວິຊາສະເພາະ, ມີປະສົບການ, ຄວາມສາມາດ, ກໍາໄດ້ກົດລະບຽບ, ກະຕິກາ ແລະ ເປັນຜູ້ຖືກແຕ່ງຕັ້ງໃຫ້ຕັດສິນການແຂ່ງຂັນ ກິລາ-ກາຍຍະກໍາ ປະເພດໃດໜຶ່ງ, ໃນໄລຍະໃດໜຶ່ງ;
6. **ບຸກຄະລາກອນກິລາ ໝາຍເຖິງ** ຜູ້ທີ່ມີສ່ວນຮ່ວມໃນ ການຝຶກແອບ, ການສະແດງ, ການແຂ່ງຂັນ, ການຄຸ້ມຄອງ ແລະ ການພັດທະນາກິລາ-ກາຍຍະກໍາ ເຊັ່ນ: ຄູຝຶກ, ກໍາມະການຕັດສິນ, ຜູ້ບໍລິຫານການກິລາ, ແພດກິລາ, ນັກຈິດຕະສາດ, ນັກວິທະຍາສາດ ການກິລາ, ຜູ້ຊ່ຽວຊານ;
7. **ກິລາ-ກາຍຍະກຳ ໃນໂຮງຮຽນ ໝາຍເຖິງ** ການສິດສອນ, ຮໍ່າຮຽນ, ຝຶກແອບ, ສະແດງ, ແຂ່ງຂັນ ກິລາ-ກາຍຍະກໍາ ໃນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ;
8. **ເຕັ້ນອາແອໂຣບິກ ໝາຍເຖິງ** ການອອກກໍາລັງກາຍຕາມຈັງຫວະສຽງເພງ.

**ມາດຕາ 4. ນະໂຍບາຍ ກ່ຽວກັບກິລາ-ກາຍຍະກໍາ**

ລັດ ຖືເອົາກິລາ-ກາຍຍະກໍາ ເປັນວຽກງານໜຶ່ງທີ່ສໍາຄັນ ໃນການປະກອບສ່ວນພັດທະນາຊັບພະຍາກອນມະນຸດ ທາງດ້ານສຸຂະພາບ ຮ່າງກາຍ ແລະ ຈິດໃຈ, ສ້າງໃຫ້ຄົນເຮົາເປັນຜູ້ທີ່ມີຄວາມອົດທົນ, ມີຄວາມເສຍສະລະ, ມີລະບຽບວິໄນ, ມີນໍ້າໃຈຮັກຊາດ ເຮັດໃຫ້ສັງຄົມມີຊີວິດຊີວາ ແລະ ມີບັນຍາກາດເບີກບານມ່ວນຊື່ນ.

ລັດ ຖືເອົາການສ້າງຂະບວນການກິລາ-ກາຍຍະກໍາມວນຊົນ ເປັນພື້ນຖານ ແລະ ການສ້າງກິລາ-ກາຍຍະກໍາລະດັບສູງ ເປັນສໍາຄັນ ກ້າວໄປເຖິງການສ້າງກິລາ-ກາຍຍະກໍາອາຊີບ ເທື່ອລະກ້າວ, ສົ່ງເສີມການແລກປ່ຽນ, ການແຂ່ງຂັນໃນລະດັບຕ່າງໆ ເປັນຕົ້ນ ລະດັບຊາດ, ພາກພື້ນ ແລະ ສາກົນ.

ລັດ ເອົາໃຈໃສ່ລົງທຶນໃຫ້ແກ່ກິລາ-ກາຍຍະກໍາ ເພື່ອກໍ່ສ້າງພື້ນຖານໂຄງລ່າງ, ກໍ່ສ້າງບໍາລຸງພະນັກງານ, ນັກກິລາ-ກາຍຍະກໍາ ເປັນຕົ້ນແມ່ນ ເຍົາວະຊົນ ຜູ້ທີ່ມີພອນສະຫວັນໃຫ້ມີຄວາມສາມາດໃນການຝຶກແອບ ແລະ ແຂ່ງຂັນ. ນອກຈາກນີ້ ລັດ ຍັງເອົາໃຈໃສ່ລົງທຶນໃນການຄົ້ນຄວ້າ, ນໍາໃຊ້ວິທະຍາສາດ-ເຕັກໂນໂລຊີ ລວມທັງ ການແພດ ເຂົ້າໃນການເຄື່ອນໄຫວ ແລະ ພັດທະນາກິລາ-ກາຍຍະກໍາ.

ລັດ ສົ່ງເສີມໃຫ້ມີການອະນຸລັກ ແລະ ພັດທະນາກິລາ-ກາຍຍະກໍາພື້ນເມືອງຂອງປະຊາຊົນບັນດາເຜົ່າ, ສົ່ງເສີມ ກິລາ-ກາຍຍະກໍາຜູ້ອາຍຸສູງ, ແມ່ຍິງ ແລະ ຄົນພິການ.

ລັດ ສົ່ງເສີມ ແລະ ຊຸກຍູ້ໃຫ້ບຸກຄົນ, ການຈັດຕັ້ງຕ່າງໆ ທັງພາກລັດ, ເອກະຊົນ, ພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ການພັດທະນາ ກິລາ-ກາຍຍະກຳ ດ້ວຍນະໂຍບາຍຕ່າງໆ.

**ມາດຕາ 5. ຫຼັກການ ກ່ຽວກັບກິລາ-ກາຍຍະກຳ**

**ກິລາ-ກາຍຍະກຳ ມີຫຼັກການພື້ນຖານ ດັ່ງນີ້ :**

1. ຕ້ອງມີລັກສະນະຊາດ, ມະຫາຊົນ, ວິທະຍາສາດ ແລະ ທັນສະໄໝ;
2. ຕ້ອງຕິດພັນກັບການສຶກສາ, ວັດທະນະທຳ, ການພັດທະນາຄົນລຸ້ນໜຸ່ມ, ສ້າງນັກກິລາ ເປັນຜູ້ຮັກຊາດ, ມີຄວາມອົດທົນ, ມີຈິດໃຈເຂັ້ມແຂງ, ມີຄວາມດຸໝັ່ນ, ຫ່າງໄກຈາກສິ່ງເສບຕິດ ແລະ ສິ່ງຫຍໍ້ທໍ້ອື່ນໆ;
3. ຕ້ອງຮັບປະກັນໃຫ້ທິດສະດີ ຕິດພັນກັບພຶດຕິກຳຕົວຈິງ, ຕິດພັນກັບການຝຶກແອບ, ການສະແດງ ແລະ ການແຂ່ງຂັນ ທີ່ມີການປະສານສົມທົບລະຫວ່າງກິລາ-ກາຍຍະກຳທ້ອງຖິ່ນ, ລະດັບຊາດ, ພາກພື້ນ ແລະ ສາກົນ;
4. ຕ້ອງຮັບໃຊ້ພາລະກິດ ພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ ແລະ ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 6. ສິດ ແລະ ພັນທະ ຂອງພົນລະເມືອງຕໍ່ກິລາ-ກາຍຍະກຳ**

ພົນລະເມືອງລາວທຸກຄົນໂດຍບໍ່ຈຳແນກ ອາຍຸ, ເພດ, ໄວ, ສຸຂະພາບ, ການພິການ, ຖານະທາງດ້ານເສດຖະກິດ-ສັງຄົມ ລ້ວນແຕ່ ມີສິດເຄື່ອນໄຫວ ຝຶກແອບ, ສະແດງ, ແຂ່ງຂັນ, ພັດທະນາກິລາ-ກາຍຍະກຳ ດ້ວຍຄວາມຕື່ນຕົວ ເພື່ອ ສຸຂະພາບ, ການມ່ວນຊື່ນ ແລະ ການພັກຜ່ອນ.

ບຸກຄົນ ແລະ ການຈັດຕັ້ງ ມີພັນທະປະກອບສ່ວນ ທຶນຮອນ, ພາຫະນະ, ວັດຖຸອຸປະກອນ, ເຫື່ອແຮງ ແລະ ສະຕິປັນຍາ ເຂົ້າໃນການພັດທະນາ ກິລາ-ກາຍຍະກຳ ໃຫ້ມີການຂະຫຍາຍຕົວ ແລະ ເຂັ້ມແຂງ.

**ມາດຕາ 7. ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ, ອົງການຈັດຕັ້ງສາກົນ ເພື່ອພັດທະນາກິລາ-ກາຍຍະກຳ ດ້ວຍການຍາດແຍ່ງການສະໜັບສະໜູນ, ການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຜູ້ຊ່ຽວຊານ, ການຈັດການແຂ່ງຂັນ, ການເຂົ້າຮ່ວມການສະແດງ ແລະ ການແຂ່ງຂັນ, ການສ້າງບຸກຄະລາກອນກິລາ-ກາຍຍະກຳ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ອື່ນໆ.

## ພາກທີ II
## ກິລາ-ກາຍຍະກຳ

### ໝວດທີ 1
### ປະເພດ, ລາຍການ, ລະດັບ, ຮູບແບບ ກິລາ-ກາຍຍະກຳ

**ມາດຕາ 8. ປະເພດ ກິລາ-ກາຍຍະກຳ**

ປະເພດ ກິລາ-ກາຍຍະກຳ ແມ່ນ ຊື່ກິລາ-ກາຍຍະກຳໃດໜຶ່ງ ທີ່ມີການຝຶກແອບ, ການສະແດງ, ການແຂ່ງຂັນ ຕາມເຕັກນິກ, ກົດລະບຽບ, ກະຕິກາ ສະເພາະ ເຊັ່ນ: ປະເພດ ບານເຕະ, ບານສົ່ງ, ບານບ້ວງ,

ກະຕໍ້, ເປຕັງ, ມວຍ, ລອຍນໍ້າ, ແລ່ນ-ລານ, ກາຍຍະສິນ, ຍົກນໍ້າໜັກ,ເຕັ້ນອາແອໂຣບິກ.

ກິລາ-ກາຍຍະກໍາ ປະເພດໃດໜຶ່ງທີ່ຈະນໍາເຂົ້າແຂ່ງຂັນນັ້ນ ຕ້ອງມີການຢັ້ງຢືນ ແລະ ຮັບຮອງຈາກ ສະຫະພັນກິລາ-ກາຍຍະກໍາ ທີ່ກ່ຽວຂ້ອງ ລະດັບທ້ອງຖິ່ນ, ລະດັບຊາດ, ອານຸພາກພື້ນ, ພາກພື້ນ ຫລື ສາກົນ.

ປະເພດ ກິລາ-ກາຍຍະກໍາ ມີບັນຊີລະອຽດຊ້ອນທ້າຍ.

ບາງປະເພດ ກິລາ-ກາຍຍະກໍາ ມີຫລາຍຊະນິດ ເຊັ່ນ:

- ບານເຕະ ມີ ຊະນິດກາງແຈ້ງ ແລະ ຊະນິດໃນຮົ່ມ;
- ບານສົ່ງ ມີ ຊະນິດໃນຮົ່ມ ແລະ ຊະນິດຫາດຊາຍ;
- ກິລາທາງນໍ້າ ມີ ຊະນິດລອຍນໍ້າ, ໂດດນໍ້າ ແລະ ຟ້ອນໃນນໍ້າ.

**ມາດຕາ 9. ລາຍການ ກິລາ-ກາຍຍະກໍາ**

ລາຍການ ກິລາ-ກາຍຍະກໍາ ແມ່ນ ການແຍກກິດຈະກໍາປະເພດກິລາ-ກາຍຍະກໍາໃດໜຶ່ງ ອອກ ເປັນ ລາຍການ ຊຶ່ງຄະນະກໍາມະການຈັດການແຂ່ງຂັນແຕ່ລະຄັ້ງເປັນຜູ້ກໍານົດ ເຊັ່ນ :

- ປະເພດແລ່ນ ມີ ລາຍການ ແລ່ນ 100 ແມັດ, 200 ແມັດ, 400 ແມັດ, 1.500 ແມັດ, 10.000 ແມັດ, ແລ່ນມາຣາທອນ ແລະ ອື່ນໆ;
- ປະເພດບານເຕະ ມີ ລາຍການ ເຕະບານຊາຍ, ເຕະບານຍິງ;
- ປະເພດລອຍນໍ້າ ມີ ລາຍການ 100 ແມັດ, 200 ແມັດ, 4 x 100 ແມັດ, 1.500 ແມັດ ແລະ ອື່ນໆ.

**ມາດຕາ 10. ລະດັບ ກິລາ-ກາຍຍະກໍາ**

ລະດັບ ກິລາ-ກາຍຍະກໍາ ແມ່ນ ການຈັດອັນດັບຄວາມສໍາຄັນ ແລະ ຄວາມສາມາດຂອງກິລາ-ກາຍຍະກໍາ.

**ກິລາ-ກາຍຍະກໍາ ມີ ສອງລະດັບ ດັ່ງນີ້ :**

1. ລະດັບມວນຊົນທົ່ວໄປ :
   - ຮາກຖານ ມີ ບ້ານ, ໂຮງຮຽນ, ຫົວໜ່ວຍທຸລະກິດ ແລະ ອື່ນໆ;
   - ຂະແໜງການ ແລະ ທ້ອງຖິ່ນ ມີ ກະຊວງ, ອົງການ, ແຂວງ, ເມືອງ;
2. ລະດັບສູງ :
   - ລະດັບຊາດ;
   - ລະດັບ ອານຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 11. ຮູບແບບ ກິລາ-ກາຍຍະກໍາ**

ຮູບແບບ ກິລາ-ກາຍຍະກໍາ ແມ່ນ ການຈັດລະບົບການເຄື່ອນໄຫວກິລາ-ກາຍຍະກໍາ ຕາມລະບຽບການທີ່ກ່ຽວຂ້ອງ.

ກິລາ-ກາຍຍະກໍາ ມີ ສອງຮູບແບບ ຄື :

1. ສະໝັກຫຼິ້ນ;
2. ອາຊີບ.

## ໝວດທີ 2
## ກິລາ-ກາຍຍະກຳ ສະໝັກຫຼິ້ນ ແລະ ອາຊີບ

**ມາດຕາ 12. ນັກກິລາ-ກາຍຍະກຳ ສະໝັກຫຼິ້ນ**

ນັກກິລາ-ກາຍຍະກຳສະໝັກຫຼິ້ນ ແມ່ນ ຜູ້ຫລິ້ນກິລາ-ກາຍຍະກຳ ໂດຍບໍ່ຍຶດຖືເປັນອາຊີບ, ຫຼິ້ນເພື່ອສຸຂະພາບ, ຄວາມມ່ວນຊື່ນ, ການສະແດງ ແລະ ການແຂ່ງຂັນ.

ນັກກິລາ-ກາຍຍະກຳ ສະໝັກຫຼິ້ນ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ຂຶ້ນທະບຽນກັບສະໂມສອນ ຫລື ສະຫະພັນໃດໜຶ່ງ ຕາມຄວາມສະໝັກໃຈຂອງຕົນ;
2. ຝຶກແອບ, ເຄື່ອນໄຫວກິລາ-ກາຍຍະກຳ ຕາມສະໂມສອນ ຫລື ສະຫະພັນທີ່ຕົນສັງກັດຢູ່;
3. ເຂົ້າຮ່ວມການສະແດງ, ການແຂ່ງຂັນ ໃນນາມສະໂມສອນ ຫລື ສະຫະພັນທີ່ຕົນສັງກັດຢູ່;
4. ຖືກຄັດເລືອກ, ຮັບຮອງເປັນນັກກິລາທີມຊາດ ຕາມມາດຕະຖານ ແລະ ຄວາມຮຽກຮ້ອງຕ້ອງການ ຂອງທີມຊາດ;
5. ໄດ້ຮັບ ການຍ້ອງຍໍ, ລາງວັນ ແລະ ນະໂຍບາຍອື່ນ ຕາມຜົນງານຂອງປະເພດກິລາ-ກາຍຍະກຳ ທີ່ຕົນໄດ້ແຂ່ງຂັນ;
6. ໄດ້ຮັບນະໂຍບາຍ ເມື່ອມີການເຈັບເປັນ, ເສຍຊີວິດ ໃນເວລາປະຕິບັດໜ້າທີ່ ຕາມລະບຽບການ;
7. ຍົກຍ້າຍໄປສັງກັດຢູ່ສະໂມສອນອື່ນ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີ ຂອງສະໂມສອນ ແລະ ສະຫະພັນທີ່ກ່ຽວຂ້ອງ;
8. ຮັບໃຊ້ສະໂມສອນ, ສະຫະພັນ ແລະ ຮັບໃຊ້ຊາດ ຕາມຄວາມຮຽກຮ້ອງຕ້ອງການ;

ສຳລັບ ນັກກິລາ-ກາຍຍະກຳ ທີ່ຢູ່ໃນທີມຊາດ ຍັງຕ້ອງປະຕິບັດລະບຽບການຂອງສູນຝຶກ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ລວມທັງ ເວລາຝຶກແອບ, ສະແດງ, ແຂ່ງຂັນ ແລະ ການເຄື່ອນໄຫວອື່ນໆ.

**ມາດຕາ 13. ນັກກິລາ-ກາຍຍະກຳອາຊີບ**

ນັກກິລາ-ກາຍຍະກຳອາຊີບ ແມ່ນ ຜູ້ຫລິ້ນກິລາ-ກາຍຍະກຳທີ່ຍຶດຖືເປັນອາຊີບ.

ນັກກິລາ-ກາຍຍະກຳອາຊີບ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ເຮັດສັນຍາ, ຂຶ້ນທະບຽນກັບສະໂມສອນ, ສະຫະພັນກິລາ-ກາຍຍະກຳອາຊີບ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ລະບຽບການຂອງກິລາ-ກາຍຍະກຳສາກົນ;
2. ປະຕິບັດຕາມສັນຍາທີ່ໄດ້ເຊັນກັນລະຫວ່າງນັກກິລາກັບສະໂມສອນ, ສະຫະພັນກິລາ-ກາຍຍະກຳອາຊີບ;
3. ເຂົ້າຮ່ວມການຄັດເລືອກ ແລະ ແຂ່ງຂັນໃນນາມທີມຊາດ, ຮັບໃຊ້ຊາດ ຕາມຄວາມຮຽກຮ້ອງຕ້ອງການ;
4. ໄດ້ຮັບການຍ້ອງຍໍ, ລາງວັນ ແລະ ນະໂຍບາຍອື່ນ ຕາມຜົນງານທີ່ຕົນໄດ້ແຂ່ງຂັນ;

5. ໄດ້ຮັບນະໂຍບາຍ ເມື່ອມີການເຈັບເປັນ, ເສຍຊີວິດ ໃນເວລາປະຕິບັດໜ້າທີ່ ຕາມລະບຽບການ ແລະ ສັນຍາ;
6. ຍົກຍ້າຍໄປສັງກັດຢູ່ສະໂມສອນອື່ນ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີຂອງສະໂມສອນ ແລະ ສະຫະພັນທີ່ກ່ຽວຂ້ອງ;
7. ເສຍພັນທະລາຍໄດ້ໃຫ້ລັດ ຕາມລະບຽບກົດໝາຍ.

ສຳລັບ ມາດຕະຖານ ແລະ ເງື່ອນໄຂຂອງນັກກິລາອາຊີບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 14. ປະເພດ ຄູຝຶກກິລາ-ກາຍຍະກຳ**

ຄູຝຶກກິລາ-ກາຍຍະກຳ ມີ ສອງປະເພດ ຄື :
1. ຄູຝຶກກິລາ-ກາຍຍະກຳ ສະໝັກຫລິ້ນ;
2. ຄູຝຶກກິລາ-ກາຍຍະກຳ ອາຊີບ.

**ມາດຕາ 15. ມາດຕະຖານ ຂອງຄູຝຶກ**

ຄູຝຶກ ຕ້ອງມີມາດຕະຖານຕົ້ນຕໍ ດັ່ງນີ້ :
1. ມີຄຸນສົມບັດ, ຄຸນວຸດທິ, ຈັນຍາບັນ ແລະ ຄວາມຮູ້ຄວາມສາມາດ ກ່ຽວກັບການຝຶກແອບ, ການສິດສອນ ກິລາ-ກາຍຍະກຳ;
2. ມີໃບປະກາສະນິຍະບັດ ຫລື ໃບຢັ້ງຢືນຈາກສະຖາບັນ ຫລື ສະຫະພັນກິລາ ທັງພາຍໃນ ແລະ ຕ່າງປະເທດ;
3. ມີປະສົບການ, ຜົນງານທີ່ຖືກຮັບຮອງຈາກສະຫະພັນກິລາ-ກາຍຍະກຳ ທີ່ກ່ຽວຂ້ອງ;
4. ມີສຸຂະພາບ, ພະລະນາໄມສົມບູນ.

ສຳລັບ ຄູຝຶກນັກກິລາ-ກາຍຍະກຳ ອາຊີບນັ້ນ ຍັງຕ້ອງມີໃບປະກາສະນິຍະບັດອາຊີບ ແລະ ການຢັ້ງຢືນ ຈາກສະຫະພັນກິລາອາຊີບສາກົນ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງຄູຝຶກ**

**ຄູຝຶກນັກກິລາ-ກາຍຍະກຳ ສະໝັກຫຼິ້ນ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :**
1. ສິດສອນ, ແນະນຳ, ນຳພານັກກິລາ-ກາຍຍະກຳ ຝຶກແອບ, ເຂົ້າຮ່ວມການສະແດງ, ການແຂ່ງຂັນຕາມລາຍການ ກິລາ-ກາຍຍະກຳປະເພດຕ່າງໆ;
2. ຍ້ອງຍໍ, ຊົມເຊີຍ, ຢັ້ງຢືນ, ສະເໜີ ປະຕິບັດນະໂຍບາຍ, ຕຳນິ, ກ່າວເຕືອນ ນັກກິລາ-ກາຍຍະກຳ ທີ່ຕົນຮັບຜິດຊອບ;
3. ໄດ້ຮັບ ການຍ້ອງຍໍ, ລາງວັນ ແລະ ນະໂຍບາຍອື່ນ ຕາມຜົນງານຕົວຈິງຂອງຕົນ;
4. ສະຫຼຸບ ລາຍງານ, ຕີລາຄາ ແລະ ປະເມີນຜົນກ່ຽວກັບວຽກງານກິລາ-ກາຍຍະກຳ ໃຫ້ສະໂມສອນ ຫລື ສະຫະພັນຂອງຕົນ;
5. ປະຕິບັດຕາມລະບຽບການເຄື່ອນໄຫວຂອງສະໂມສອນ, ສະຫະພັນກິລາ ທີ່ກ່ຽວຂ້ອງ.

ສຳລັບ ຄູຝຶກນັກກິລາ-ກາຍຍະກຳອາຊີບ ນອກຈາກສິດ ແລະ ໜ້າທີ່ດັ່ງກ່າວນີ້ແລ້ວ ຍັງມີສິດ ແລະ ໜ້າທີ່ ໃນການເຮັດສັນຍາກັບສະໂມສອນກິລາ-ກາຍຍະກຳອາຊີບ, ສະຫະພັນກິລາແຫ່ງຊາດ ແລະ

ສະຫະພັນກິລາສາກົນ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ລະບຽບການຂອງກິລາ-ກາຍຍະກຳສາກົນ ພ້ອມທັງ ປະຕິບັດສັນຍາດັ່ງກ່າວ.

**ມາດຕາ 17. ມາດຕະຖານ ຂອງກຳມະການຕັດສິນ**

**ກຳມະການຕັດສິນ ກິລາ-ກາຍຍະກຳ ມີມາດຕະຖານຕົ້ນຕໍ ດັ່ງນີ້ :**

1. ມີ ຄຸນສົມບັດ, ຄຸນວຸດທິ, ຈັນຍາບັນ, ມີຄວາມຍຸຕິທຳ, ມີຄວາມຮູ້ ຄວາມສາມາດ, ປະສົບການ, ວິຊາສະເພາະໃນການຕັດສິນກິລາ-ກາຍຍະກຳ;
2. ມີໃບປະກາສະນິຍະບັດ, ໃບຢັ້ງຢືນຈາກສະຖາບັນ ຫລື ສະຫະພັນກິລາ ທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ;
3. ມີຜົນງານທີ່ຖືກຮັບຮອງຈາກສະຫະພັນກິລາ ທີ່ກ່ຽວຂ້ອງ;
4. ມີສຸຂະພາບ, ພະລະນາໄມສົມບູນ.

**ມາດຕາ 18. ສິດ ແລະ ໜ້າທີ່ ຂອງກຳມະການຕັດສິນ**

**ກຳມະການຕັດສິນ ກິລາ-ກາຍຍະກຳ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :**

1. ແນະນຳ ກົດລະບຽບ, ກະຕິກາ, ກວດກາທາງດ້ານເຕັກນິກກ່ອນ ການສະແດງ, ການແຂ່ງຂັນ;
2. ຕັດສິນດ້ວຍຄວາມຖືກຕ້ອງ ແລະ ຍຸຕິທຳ ຕາມກົດລະບຽບ, ກະຕິກາ ຂອງການແຂ່ງຂັນ;
3. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍໃນເວລາແຂ່ງຂັນ;
4. ໄດ້ຮັບ ການປົກປ້ອງຈາກການຈັດຕັ້ງທີ່ກ່ຽວຂ້ອງ ໃນເວລາປະຕິບັດໜ້າທີ່ ຕາມລະບຽບກົດໝາຍ;
5. ໄດ້ຮັບ ການຍ້ອງຍໍ, ລາງວັນ ແລະ ນະໂຍບາຍອື່ນ ຕາມຜົນງານ ແລະ ລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 19. ການມອບໂອນ, ຍົກຍ້າຍ ນັກກິລາ**

ການມອບໂອນ, ຍົກຍ້າຍ ນັກກິລາ-ກາຍຍະກຳສະໝັກຫຼິ້ນ ຫຼື ອາຊີບ ລະຫວ່າງສະໂມສອນກິລາ-ກາຍຍະກຳ ພາຍໃນປະເທດ ຫຼື ຕ່າງປະເທດ ໃຫ້ປະຕິບັດຕາມການຕົກລົງນຳກັນ ໂດຍມີການຮັບຮູ້ຈາກສະຫະພັນກິລາ-ກາຍຍະກຳທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບ ລະບຽບກົດໝາຍ ຂອງ ສປປ ລາວ ແລະ ລະບຽບການ ຂອງສະຫະພັນກິລາສາກົນ.

## ໝວດທີ 3
## ກິລາ-ກາຍຍະກຳມວນຊົນ

**ມາດຕາ 20. ກິລາ-ກາຍຍະກຳມວນຊົນ**

ກິລາ-ກາຍຍະກຳມວນຊົນ ແມ່ນ ກິດຈະກຳການຝຶກແອບ,ການສະແດງ, ການຫຼິ້ນ, ການແຂ່ງຂັນກິລາ-ກາຍຍະກຳຂອງພົນລະເມືອງທົ່ວໄປ ໂດຍບໍ່ຈຳແນກເຊື້ອຊາດ, ອາຍຸ, ເພດ, ໄວ, ສຸຂະພາບ, ການພິການ, ຖານະທາງເສດຖະກິດ-ສັງຄົມ ຢູ່ໃນລະດັບ ບ້ານ, ໂຮງຮຽນ, ໂຮງງານ, ເມືອງ ແລະ ອື່ນໆ ແນໃສ່ສິ່ງ

ເສີມສຸຂະພາບ, ພະລະນາໄມ, ຄວາມມ່ວນຊື່ນ ເປັນຕົ້ນຕໍ ໂດຍປະຕິບັດຕາມກົດລະບຽບ, ກະຕິກາທີ່ແນ່ນອນ.

**ມາດຕາ 21. ພະລະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນ**

ພະລະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນ ແມ່ນ ວິຊາຮຽນໜຶ່ງ ໃນຫຼັກສູດການສຶກສາ ແນໃສ່ເຮັດໃຫ້ຜູ້ຮຽນມີຄວາມຮູ້, ຄວາມສາມາດພື້ນຖານກ່ຽວກັບ ກິລາ-ກາຍຍະກຳ ໂດຍຜ່ານບົດຮຽນ, ການເຄື່ອນໄຫວດັ່ງກ່າວ ເພື່ອເປັນການສົ່ງເສີມ ຄວາມເບີກບານມ່ວນຊື່ນ, ສຸຂະພາບ, ພະລະນາໄມ, ລະບຽບວິໄນ, ຜູ້ທີ່ມີພອນສະຫວັນດ້ານກິລາ-ກາຍຍະກຳ ທັງເປັນການປະກອບສ່ວນ ປະຕິບັດການສຶກສາຮອບດ້ານ.

**ມາດຕາ 22. ຄວາມຮັບຜິດຊອບຂອງລັດ ຕໍ່ພະລະສຶກສາ ແລະ ກິລາ-ກາຍຍະກຳໃນໂຮງຮຽນ**

ລັດຖະບານ ມີນະໂຍບາຍລົງທຶນຕົ້ນຕໍ ເພື່ອຈັດສັນທີ່ດິນ, ສ້າງພື້ນຖານໂຄງລ່າງ, ສະໜອງວັດຖຸອຸປະກອນ, ພາຫະນະ ໃຫ້ແກ່ວຽກງານພະລະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນຂອງລັດ.

ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ມີໜ້າທີ່ສົມທົບກັບກະຊວງສຶກສາທິການ ສ້າງຫຼັກສູດພະລະສຶກສາ ແລະ ກິລາ-ກາຍຍະກຳ ສຳລັບໂຮງຮຽນຕ່າງໆ ລວມທັງ ການກໍ່ສ້າງ, ບຳລຸງຄູອາຈານ, ການແນະນຳ ການເຄື່ອນໄຫວກິລາ-ກາຍຍະກຳ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກເອກະຊົນ ທີ່ມີໂຮງຮຽນ, ສູນ, ສະຖາບັນການສຶກສາ ຕ້ອງມີຄວາມຮັບຜິດຊອບໃນການຈັດສັນທີ່ດິນ, ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງວັດຖຸອຸປະກອນ, ສັບຊ້ອນຄູ-ອາຈານ ກິລາ-ກາຍຍະກຳ ໃຫ້ແກ່ວຽກງານພະລະສຶກສາ ແລະ ກິລາ-ກາຍຍະກຳໃນໂຮງຮຽນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

ສຳລັບ ນັກຮຽນ, ນັກສຶກສາ ທີ່ເປັນທັງນັກກິລາ-ກາຍຍະກຳ ລະດັບທ້ອງຖິ່ນ ຫລື ລະດັບຊາດ ພາຍຫລັງສຳເລັດການຝຶກແອບ, ການສະແດງ, ການແຂ່ງຂັນແລ້ວ ລັດມີນະໂຍບາຍໃຫ້ນັກຮຽນ, ນັກສຶກສາດັ່ງກ່າວ ໄດ້ສືບຕໍ່ຮຳຮຽນ, ບຳລຸງ ແລະ ສອບເສັງ ຕາມລະບຽບການ.

**ມາດຕາ 23. ຄວາມຮັບຜິດຊອບ ຂອງໂຮງຮຽນ**

ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ລວມທັງພາກລັດ ແລະ ເອກະຊົນ ມີຄວາມຮັບຜິດຊອບຕົ້ນຕໍ ຕໍ່ພະລະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນ ດັ່ງນີ້ :

1. ປະຕິບັດຕາມຫຼັກສູດ, ໂຄງການ ກ່ຽວກັບພະລະສຶກສາ ແລະ ກິລາ-ກາຍຍະກຳ;
2. ຄຸ້ມຄອງ, ນຳໃຊ້ ພື້ນຖານວັດຖຸອຸປະກອນ ພະລະສຶກສາ ແລະ ກິລາ-ກາຍຍະກຳ ໃຫ້ມີປະສິດທິຜົນ;
3. ຈັດຕັ້ງໃຫ້ນັກຮຽນ, ນັກສຶກສາ ໄດ້ເຂົ້າຮ່ວມການເຄື່ອນໄຫວກິລາ-ກາຍຍະກຳ ໃນໂຮງຮຽນ ແລະ ສັງຄົມ ຢ່າງເປັນປົກກະຕິ;
4. ຮັບປະກັນຄວາມປອດໄພໃຫ້ແກ່ຜູ້ສອນ ແລະ ຜູ້ຮຽນໃນເວລາເຄື່ອນໄຫວພະລະສຶກສາ ແລະ ກິລາ-ກາຍຍະກຳ;
5. ສົ່ງເສີມ ນັກຮຽນ, ນັກສຶກສາຜູ້ທີ່ມີພອນສະຫວັນທາງດ້ານກິລາ-ກາຍຍະກຳ ເພື່ອໃຫ້ໄດ້ເຂົ້າຮ່ວມໃນຂະບວນການກິລາ-ກາຍຍະກຳ ທັງຮັບປະກັນການສຶກສາຮຳຮຽນຂອງນັກຮຽນ, ນັກສຶກສານັ້ນ.

**ມາດຕາ 24. ສິດ ແລະ ໜ້າທີ່ ຂອງຄູ-ອາຈານ**

**ຄູ-ອາຈານ ມີສິດ ແລະ ໜ້າທີ່ຕົ້ນຕໍ ຕໍ່ພະລະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນດັ່ງນີ້:**

1. ປະຕິບັດການສິດສອນວິຊາພະລະສຶກສາ ແລະ ກິລາ-ກາຍຍະກຳ ໃຫ້ຖືກຕ້ອງຕາມຫຼັກສູດ;
2. ຈັດຕັ້ງການເຄື່ອນໄຫວກິລາ-ກາຍຍະກຳ ໃນໂຮງຮຽນຢ່າງເປັນປົກກະຕິ;
3. ສົ່ງເສີມ, ບຳລຸງ ນັກຮຽນ, ນັກສຶກສາ ເປັນຕົ້ນ ຜູ້ທີ່ມີພອນສະຫວັນດ້ານກິລາ-ກາຍຍະກຳ ໃຫ້ສາມາດເຄື່ອນໄຫວເລີ່ມມາແຕ່ເຍົາໄວ;
4. ຮັບປະກັນຄວາມປອດໄພ ໃຫ້ແກ່ນັກຮຽນ, ນັກສຶກສາ ໃນການເຄື່ອນໄຫວພະລະສຶກສາ ແລະ ກິລາ-ກາຍຍະກຳ;
5. ໄດ້ຮັບນະໂຍບາຍຕ່າງໆ ຕາມລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 25. ສິດ ແລະ ໜ້າທີ່ ຂອງນັກຮຽນ, ນັກສຶກສາ**

ນັກຮຽນ, ນັກສຶກສາ ມີສິດ ແລະ ໜ້າທີ່ຕົ້ນຕໍ ຕໍ່ພະລະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນ ດັ່ງນີ້ :

1. ຕັ້ງໜ້າຮໍ່າຮຽນວິຊາພະລະສຶກສາ ແລະ ກິລາ-ກາຍຍະກຳ ຢ່າງເປັນປົກກະຕິ ແລະ ເຂັ້ມງວດ;
2. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳ ພະລະສຶກສາ ແລະ ກິລາ-ກາຍຍະກຳ ຕາມພອນສະຫວັນຂອງຕົນ;
3. ເຂົ້າຮ່ວມ ການຝຶກແອບ, ການສະແດງ, ການແຂ່ງຂັນ ແລະ ສາມາດຖືກຄັດເລືອກເປັນນັກກິລາ-ກາຍຍະກຳ ລະດັບສູງ;
4. ນຳໃຊ້, ປົກປັກຮັກສາພື້ນຖານໂຄງລ່າງ, ວັດຖຸອຸປະກອນ, ພາຫະນະຂອງວຽກງານພະລະສຶກສາ ແລະ ກິລາ-ກາຍຍະກຳ ໃນໂຮງຮຽນ ໃຫ້ມີປະສິດທິຜົນ.

**ມາດຕາ 26. ກິລາ-ກາຍຍະກຳ ໃນກຳລັງປະກອບອາວຸດ**

ກິລາ-ກາຍຍະກຳ ໃນກຳລັງປະກອບອາວຸດ ແມ່ນ ການຝຶກແອບ, ການສະແດງ, ການແຂ່ງຂັນກິລາ-ກາຍຍະກຳທົ່ວໄປ ແລະ ກິລາ-ກາຍຍະກຳຂອງກຳລັງປະກອບອາວຸດ ເພື່ອສົ່ງເສີມສຸຂະພາບ, ພະລະນາໄມ, ຄວາມເບີກບານມ່ວນຊື່ນ, ມີລະບຽບວິໄນ, ຄວາມສາມັກຄີພາຍໃນ, ປະກອບສ່ວນເຮັດໃຫ້ກຳລັງປະກອບອາວຸດ ມີສິນລະປະຍຸດ, ຄວາມເຂັ້ມແຂງ, ມີແບບແຜນ ແລະ ທັນສະໄໝ.

**ມາດຕາ 27. ຄວາມຮັບຜິດຊອບຂອງລັດ ຕໍ່ກິລາ-ກາຍຍະກຳ ໃນກຳລັງປະກອບອາວຸດ**

ລັດ ມີຄວາມຮັບຜິດຊອບຕົ້ນຕໍ ຕໍ່ກິລາ-ກາຍຍະກຳໃນກຳລັງປະກອບອາວຸດ ດັ່ງນີ້ :

1. ຈັດສັນທີ່ດິນ, ສ້າງພື້ນຖານວັດຖຸ, ສະໜອງ ພາຫະນະ, ອຸປະກອນ, ງົບປະມານ, ສ້າງນັກກິລາ, ຄູຝຶກ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ກຳລັງປະກອບອາວຸດ;
2. ປະກາດໃຊ້ ມາດຕະຖານກ່ຽວກັບການຝຶກແອບ, ການສ້າງ, ການບຳລຸງ ຄູຝຶກ, ນັກກິລາ ແລະ ກຳນົດ ນະໂຍບາຍ, ລາງວັນ ສຳລັບກິລາ-ກາຍຍະກຳໃນກຳລັງປະກອບອາວຸດ.

**ມາດຕາ 28. ຄວາມຮັບຜິດຊອບ ຂອງກຳລັງປະກອບອາວຸດ**

ກຳລັງປະກອບອາວຸດ ມີຄວາມຮັບຜິດຊອບຕົ້ນຕໍ ຕໍ່ກິລາ-ກາຍຍະກຳ ດັ່ງນີ້:

1. ຈັດຕັ້ງແຜນການຝຶກແອບກິລາ-ກາຍຍະກຳ ໃຫ້ແກ່ພະນັກງານ, ນັກຮົບຂອງຕົນ ຢ່າງຄົບຖ້ວນ, ເປັນປົກກະຕິ ແລະ ທົ່ວເຖິງ;
2. ສ້າງທຸກເງື່ອນໄຂໃຫ້ແກ່ພະນັກງານ, ນັກຮົບ ໄດ້ມີໂອກາດເຂົ້າຮ່ວມຂະບວນການກິລາ-ກາຍຍະກຳ ໃນກົມກອງຂອງຕົນ ແລະ ໃນສັງຄົມ;
3. ນຳໃຊ້, ປົກປັກຮັກສາ ພື້ນຖານວັດຖຸ, ພາຫະນະ ແລະ ອຸປະກອນ ກິລາ-ກາຍຍະກຳ ໃຫ້ມີປະສິດທິຜົນ.

**ມາດຕາ 29. ສິດ ແລະ ໜ້າທີ່ ຂອງພະນັກງານ, ນັກຮົບ**

**ພະນັກງານ, ນັກຮົບ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :**

1. ເອົາໃຈໃສ່ຝຶກແອບກິລາ-ກາຍຍະກຳ ຕາມແຜນການຂອງກົມກອງຕົນຢ່າງເປັນປົກກະຕິ;
2. ເຂົ້າຮ່ວມການເຄື່ອນໄຫວກິລາ-ກາຍຍະກຳ ໃນກົມກອງຂອງຕົນ ແລະ ໃນສັງຄົມ;
3. ສາມາດໄດ້ຮັບການຄັດເລືອກເຂົ້າເປັນນັກກິລາ-ກາຍຍະກຳລະດັບສູງ;
4. ໄດ້ຮັບນະໂຍບາຍຕ່າງໆ ຕາມລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 30. ກິລາ-ກາຍຍະກຳ ສຳລັບພະນັກງານ, ຜູ້ອາຍຸສູງ ແລະ ແມ່ຍິງ**

ກິລາ-ກາຍຍະກຳ ສຳລັບ ພະນັກງານ, ຜູ້ອາຍຸສູງ, ແມ່ຍິງ ແມ່ນ ການຝຶກແອບ, ການອອກກຳລັງກາຍ, ການສະແດງ, ການແຂ່ງຂັນ ເພື່ອສົ່ງເສີມສຸຂະພາບ, ພະລະນາໄມທາງດ້ານຮ່າງກາຍ, ຈິດໃຈ ເພື່ອເຮັດຫລ້ອນໜ້າທີ່ຂອງຕົນ ແລະ ສືບຕໍ່ປະກອບສ່ວນໃຫ້ແກ່ສັງຄົມ.

ລັດ ແລະ ສັງຄົມ ສ້າງເງື່ອນໄຂ, ສົ່ງເສີມໃຫ້ ພະນັກງານ, ຜູ້ອາຍຸສູງ, ແມ່ຍິງ ໄດ້ເຄື່ອນໄຫວຝຶກແອບ, ຫຼິ້ນ, ສະແດງ, ແຂ່ງຂັນກິລາ-ກາຍຍະກຳ ຢ່າງເປັນປົກກະຕິ.

ອົງການຈັດຕັ້ງມະຫາຊົນທຸກຂັ້ນ ຕ້ອງເອົາໃຈໃສ່ໂຄສະນາ ສຶກສາອົບຮົມໃຫ້ພະນັກງານ, ຜູ້ອາຍຸສູງ, ແມ່ຍິງ ມີຄວາມຕື່ນຕົວ ແລະ ຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວ ກິລາ-ກາຍຍະກຳ ໃຫ້ເປັນຂະບວນຟົດຟື້ນ ແລະ ສະໝໍ່າສະເໝີ.

**ມາດຕາ 31. ກິລາ-ກາຍຍະກຳ ສຳລັບຄົນພິການ**

ລັດ ມີນະໂຍບາຍສົ່ງເສີມໃຫ້ຄົນພິການ ໄດ້ເຂົ້າຮ່ວມການເຄື່ອນໄຫວກິລາ-ກາຍຍະກຳ ເພື່ອສຸຂະພາບ, ພະລະນາໄມທາງດ້ານຮ່າງກາຍ, ສ້າງຄວາມເບີກບານມ່ວນຊື່ນ, ຄວາມເຂັ້ມແຂງທາງດ້ານຈິດໃຈ ເຊື່ອມຕົວເຂົ້າສັງຄົມໄດ້ເປັນຢ່າງດີ, ພ້ອມກັນນັ້ນ ລັດ ມີນະໂຍບາຍສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງສັງຄົມ ໃຫ້ການອຸປະຖຳກິລາ-ກາຍຍະກຳ ສຳລັບຄົນພິການ.

ລັດ ແລະ ສັງຄົມ ປະຕິບັດລະບອບອຸດໜູນຕໍ່ນັກກິລາ-ກາຍຍະກຳຄົນພິການ ໃນການຝຶກແອບ ແລະ ການເຂົ້າຮ່ວມແຂ່ງຂັນ ຊີງລາງວັນລະດັບຕ່າງໆ ເປັນຕົ້ນ ລະດັບຊາດ ແລະ ສາກົນ.

ອົງການຄຸ້ມຄອງກິລາ-ກາຍຍະກຳທຸກຂັ້ນ ຕ້ອງປະສານສົມທົບກັບອົງການຈັດຕັ້ງສັງຄົມ ສ້າງເງື່ອນໄຂໃຫ້ຄົນພິການເຂົ້າຮ່ວມຂະບວນການກິລາ-ກາຍຍະກຳ ພ້ອມກັນນັ້ນ ກໍຕ້ອງຄົ້ນຄວ້າອອກແບບກິດຈະກຳ, ຫຼັກສູດ, ຕຳລາ ກິລາ-ກາຍຍະກຳ ໃຫ້ສອດຄ່ອງກັບຄົນພິການແຕ່ລະປະເພດ.

**ມາດຕາ 32. ກິລາ-ກາຍຍະກຳ ສຳລັບຜູ້ອອກແຮງງານ**

ການຈັດຕັ້ງ ແລະ ບຸກຄົນ ທັງພາກລັດ, ເອກະຊົນທີ່ນຳໃຊ້ແຮງງານ ຕ້ອງຈັດຕັ້ງໃຫ້ຜູ້ອອກແຮງງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໄດ້ເຄື່ອນໄຫວກິລາ-ກາຍຍະກຳ ເພື່ອສຸຂະພາບ ໃຫ້ສາມາດປະຕິບັດໜ້າທີ່ຂອງຕົນຢ່າງເປັນປົກກະຕິ.

ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ຕ້ອງສົມທົບກັບກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງປື້ມຄູ່ມື ທັດກາຍຍະບໍລິຫານ, ອອກແບບກິດຈະກຳກິລາ-ກາຍຍະກຳ ເພື່ອສຸຂະພາບ ແລະ ນຳໄປເຜີຍແຜ່ຈັດຕັ້ງປະຕິບັດຢ່າງກວ້າງຂວາງ.

ຜູ້ອອກແຮງງານ ກໍຕ້ອງມີຄວາມຮັບຜິດຊອບ ແລະ ຕື່ນຕົວເຄື່ອນໄຫວ ກິລາ-ກາຍຍະກຳຢ່າງເປັນປົກກະຕິ ຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ.

**ມາດຕາ 33. ກິລາ-ກາຍຍະກຳພື້ນເມືອງ**

ກິລາ-ກາຍຍະກຳພື້ນເມືອງ ແມ່ນ ກິດຈະກຳທີ່ມີຮູບແບບການຫຼິ້ນ, ການສະແດງ, ການແຂ່ງຂັນດັ້ງເດີມຂອງປະຊາຊົນບັນດາເຜົ່າ ໃນວັນບຸນ, ງານປະເພນີຕ່າງໆ ເພື່ອເສີມສ້າງສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ ເຊັ່ນ: ກິລາ ໝາກຂ່າງ, ຍິງໜ້າ, ເຮືອຊ່ວງ, ແຂ່ງກອງຄູ່, ກອງຫາງ, ມວຍລາຍລາວ, ຕີຄີ, ໂຍນໝາກຄອນ.

ລັດ ມີນະໂຍບາຍ ເພື່ອອະນຸລັກ ແລະ ສົ່ງເສີມກິລາ-ກາຍຍະກຳພື້ນເມືອງຂອງປະຊາຊົນບັນດາເຜົ່າ ໃຫ້ມີການພັດທະນາ, ຍືນຍົງ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

ອົງການຄຸ້ມຄອງກິລາ-ກາຍຍະກຳແຕ່ລະຂັ້ນ ແລະ ສັງຄົມ ມີຄວາມຮັບຜິດຊອບໃນການຈັດຕັ້ງ, ເຄື່ອນໄຫວກິລາ-ກາຍຍະກຳພື້ນເມືອງ ຂອງປະຊາຊົນບັນດາເຜົ່າ ຢ່າງເປັນປົກກະຕິ.

**ມາດຕາ 34. ກິລາ-ກາຍຍະກຳເພື່ອການບັນເທີງ**

ກິລາ-ກາຍຍະກຳເພື່ອການບັນເທີງ ແມ່ນ ກິດຈະກຳ ຊຶ່ງຜູ້ຫລິ້ນ ນຳມາສະແດງເພື່ອການບັນເທີງ, ຄວາມມ່ວນຊື່ນ, ເອກອ້າງຄວາມສາມາດ ໃນງານຕ່າງໆ ເຊັ່ນ: ກາຍຍະສິນ, ເຕັ້ນອາແອໂຣບິກ.

ລັດ ສ້າງເງື່ອນໄຂໃຫ້ແກ່ການພັດທະນາກິລາ-ກາຍຍະກຳເພື່ອການບັນເທີງ ແນໃສ່ ສົ່ງເສີມຜູ້ທີ່ມີພອນສະຫວັນ, ຄວາມສາມາດພິເສດ ແລະ ຕອບສະໜອງຄວາມຕ້ອງການຂອງສັງຄົມ.

ອົງການຄຸ້ມຄອງກິລາ-ກາຍຍະກຳແຕ່ລະຂັ້ນ ຮັບຜິດຊອບໃນການຈັດຕັ້ງ, ເຄື່ອນໄຫວກິລາ-ກາຍຍະກຳ ເພື່ອການບັນເທີງ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 35. ການແຂ່ງຂັນກິລາ-ກາຍຍະກຳມວນຊົນ**

ການແຂ່ງຂັນກິລາ-ກາຍຍະກຳມວນຊົນ ແມ່ນ ການແຂ່ງຂັນທົ່ວໄປ ກ່ຽວກັບປະເພດກິລາ-ກາຍຍະກຳໃດໜຶ່ງ ໂດຍບໍ່ເຈາະຈົງເຖິງສະຖິຕິ, ມາດຕະຖານ ແຕ່ຕ້ອງດຳເນີນໄປຕາມກົດລະບຽບ ແລະ ກະຕິກາ

ການແຂ່ງຂັນປະເພດດັ່ງກ່າວ ແນໃສ່ ສ້າງຄວາມເບີກບານມ່ວນຊື່ນ, ຄວາມສາມັກຄີ, ສຸຂະພາບ, ມິດຕະພາບ, ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ທັງເປັນການປະກອບສ່ວນເຮັດໃຫ້ສັງຄົມ ມີຄວາມປອດໃສ, ຫ່າງໄກຈາກສິ່ງເສບຕິດ.

ການຈັດການແຂ່ງຂັນກິລາ-ກາຍຍະກຳມວນຊົນ ແມ່ນ ຄວາມຮັບຜິດຊອບຂອງບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ແລະ ມີການຄຸ້ມຄອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

## ໝວດທີ 4
## ກິລາ-ກາຍຍະກຳລະດັບສູງ

### ມາດຕາ 36. ກິລາ-ກາຍຍະກຳລະດັບສູງ

ກິລາ-ກາຍຍະກຳລະດັບສູງ ແມ່ນ ກິດຈະກຳການແຂ່ງຂັນຫວັງຜົນທາງດ້ານມາດຕະຖານ, ເຕັກນິກ, ຍຸດທະວິທີ, ວິທະຍາສາດ, ສະຖິຕິ, ຄຸນນະພາບໃນລະດັບຊາດ ແລະ ສາກົນ.

### ມາດຕາ 37. ການຈັດການແຂ່ງຂັນ

ການຈັດການແຂ່ງຂັນກິລາ-ກາຍຍະກຳລະດັບສູງ ແມ່ນ ການຈັດຕັ້ງແຂ່ງຂັນກິລາ-ກາຍຍະກຳປະເພດໃດໜຶ່ງ ຫຼື ຫຼາຍປະເພດ ໃນທົ່ວປະເທດ ລວມທັງ ງານມະຫາກຳກິລາ-ກາຍຍະກຳແຫ່ງຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ.

### ມາດຕາ 38. ການອະນຸຍາດຈັດການແຂ່ງຂັນ ກິລາ-ກາຍຍະກຳລະດັບສູງ

ການຈັດການແຂ່ງຂັນກິລາ-ກາຍຍະກຳລະດັບສູງ ປະເພດໃດໜຶ່ງ ຫຼື ຫຼາຍປະເພດ ໃນທົ່ວປະເທດ ແມ່ນ ປະທານຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ເປັນຜູ້ອະນຸຍາດ ຕາມການສະເໜີຂອງສະຫະພັນກິລາ-ກາຍຍະກຳແຫ່ງຊາດ ທີ່ກ່ຽວຂ້ອງ.

ການຈັດງານມະຫາກຳກິລາແຫ່ງຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ຢູ່ ສປປ ລາວ ແມ່ນນາຍົກລັດຖະມົນຕີ ເປັນຜູ້ອະນຸຍາດ ຕາມການສະເໜີຂອງປະທານຄະນະກຳມະການກິລາ-ກາຍຍະກຳ ແຫ່ງຊາດ.

### ມາດຕາ 39. ຄະນະກິລາ-ກາຍຍະກຳທີມຊາດ

ຄະນະກິລາ-ກາຍຍະກຳທີມຊາດປະເພດໃດໜຶ່ງ ຫຼື ຫຼາຍປະເພດ ແມ່ນ ຄະນະທີ່ຖືກແຕ່ງຕັ້ງໂດຍຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ຕາມການສະເໜີຂອງສະຫະພັນກິລາທີ່ກ່ຽວຂ້ອງ ເພື່ອໄປເຄື່ອນໄຫວຢູ່ພາຍໃນ ແລະ ຕ່າງປະເທດ ຊຶ່ງປະກອບດ້ວຍ ນັກກິລາ-ກາຍຍະກຳ, ຄະນະນຳ, ຄູຝຶກ, ກຳມະການຕັດສິນ, ຜູ້ບໍລິຫານການກິລາ, ແພດກິລາ, ນັກຈິດຕະສາດ, ນັກວິທະຍາສາດ ການກິລາ ແລະ ຜູ້ຊ່ຽວຊານ.

### ມາດຕາ 40. ມາດຕະຖານຂອງນັກກິລາ-ກາຍຍະກຳທີມຊາດ

ນັກກິລາ-ກາຍຍະກຳທີມຊາດ ມີມາດຕະຖານຕົ້ນຕໍ ດັ່ງນີ້ :

1. ເປັນຄົນທີ່ຖືສັນຊາດລາວ ຫລື ສັນຊາດອື່ນ ທີ່ລັດຖະບານຕົກລົງ;

2. ມີຈິດໃຈຮັກຊາດ, ມີຄຸນສົມບັດ, ຈັນຍາບັນ, ມີນ້ຳໃຈນັກກິລາ, ຄວາມເສຍສະລະ, ຄວາມມຸ່ງຫວັງພັດທະນາຕົນເອງ, ມີລະບຽບວິໄນ, ສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍ;
3. ມີພອນສະຫວັນດ້ານກິລາ-ກາຍຍະກຳ;
4. ມີສຸຂະພາບແຂງແຮງ, ມີຮູບຮ່າງເໝາະສົມກັບກິລາປະເພດທີ່ຕົນຫຼິ້ນ.

ນັກກິລາ-ກາຍຍະກຳທີມຊາດ ທີ່ຖືກຄັດເລືອກຕາມມາດຕະຖານດັ່ງກ່າວແລ້ວ ຕ້ອງໄດ້ຂຶ້ນທະບຽນ ຕາມຫຼັກວິຊາການ.

**ມາດຕາ 41. ການຮັບຮອງຜົນງານ ແລະ ສະຖິຕິການແຂ່ງຂັນ**

ຄະນະສະຫະພັນກິລາ-ກາຍຍະກຳແຫ່ງຊາດ ຂອງກິລາ-ກາຍຍະກຳປະເພດຕ່າງໆ ເປັນຜູ້ຮັບຮອງຜົນງານ, ຈັດລະດັບ, ສະຖິຕິການແຂ່ງຂັນ ຂອງນັກກິລາ-ກາຍຍະກຳ ທັງຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 42. ການກຳນົດລາງວັນ**

ການກຳນົດລາງວັນ, ບຳເນັດ ສຳລັບຜູ້ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳລະດັບສູງ ແມ່ນຄະນະກຳມະການຈັດການແຂ່ງຂັນ ເປັນຜູ້ກຳນົດແຕ່ລະຄັ້ງ.

## ພາກທີ III
## ການພັດທະນາກິລາ-ກາຍຍະກຳ

### ໝວດທີ 1
### ການພັດທະນາບຸກຄະລາກອນ

**ມາດຕາ 43. ການພັດທະນານັກກິລາ-ກາຍຍະກຳ**

ການພັດທະນານັກກິລາ-ກາຍຍະກຳ ແມ່ນ ການເລືອກເຟັ້ນ, ເຕົ້າໂຮມ, ບຳລຸງ, ສ້າງ, ຝຶກແອບ, ທົດສອບນັກກິລາໃນລະດັບລຸ້ນອາຍຸຕ່າງໆ ເຮັດໃຫ້ມີຄວາມຊຳນິຊຳນານ, ສຸຂະພາບແຂງແຮງ, ມີນ້ຳໃຈຮັກຊາດ, ອົດທົນ, ດຸໝັ່ນ, ມີພິກໄຫວ ເພື່ອເຂົ້າຮ່ວມການຫລິ້ນ, ການສະແດງ, ການແຂ່ງຂັນໃຫ້ມີປະສິດທິຜົນສູງ ລວມທັງ ກິລາ-ກາຍຍະກຳມວນຊົນທົ່ວໄປ.

**ມາດຕາ 44. ການພັດທະນານັກກິລາ-ກາຍຍະກຳພອນສະຫວັນ**

ການພັດທະນານັກກິລາ-ກາຍຍະກຳພອນສະຫວັນ ແມ່ນ ການເລືອກເຟັ້ນ ຜູ້ທີ່ມີພອນສະຫວັນແຕ່ເຍົາໄວໃນກິລາ-ກາຍຍະກຳປະເພດໃດໜຶ່ງ ມາເຕົ້າໂຮມ, ບຳລຸງ, ສ້າງ, ຝຶກແອບໃຫ້ເປັນລະບົບຕໍ່ເນື່ອງ ເຮັດໃຫ້ມີຄວາມຊຳນິຊຳນານຂຶ້ນເລື້ອຍໆ ເພື່ອຮັບໃຊ້ການແຂ່ງຂັນລະດັບສູງໃນອະນາຄົດ.

ລັດ ແລະ ສັງຄົມ ເອົາໃຈໃສ່ເປັນພິເສດຕໍ່ການພັດທະນານັກກິລາ-ກາຍຍະກຳ ພອນສະຫວັນ ດ້ວຍການສ້າງໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ຢູ່ສູນກາງ ແລະ ທ້ອງຖິ່ນ ລວມທັງ ການປະຕິບັດນະໂຍບາຍຢ່າງເໝາະສົມ.

**ມາດຕາ 45. ການພັດທະນາບຸກຄະລາກອນກິລາ-ກາຍຍະກຳອື່ນ**

ການພັດທະນາບຸກຄະລາກອນກິລາ-ກາຍຍະກຳອື່ນ ແມ່ນ ການຝຶກອົບຮົມ, ບຳລຸງ, ຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ ກ່ຽວກັບວິຊາການທີ່ກ່ຽວຂ້ອງ ໃຫ້ແກ່ຄູຝຶກ, ກຳມະການຕັດສິນ, ຜູ້ບໍລິຫານການກິລາ, ແພດກິລາ, ນັກຈິດຕະສາດ, ນັກວິທະຍາສາດ ແລະ ຜູ້ຊ່ຽວຊານກິລາ-ກາຍຍະກຳ ເພື່ອຮັບໃຊ້ວຽກງານກິລາ-ກາຍຍະກຳ ໃຫ້ມີປະສິດທິພາບສູງ.

ລັດ ແລະ ສັງຄົມ ເອົາໃຈໃສ່ພັດທະນາບຸກຄະລາກອນກິລາ-ກາຍຍະກຳອື່ນ ດ້ວຍການລົງທຶນສ້າງ ໂຮງຮຽນ, ສູນ, ສະຖາບັນ, ສະໜອງງົບປະມານ, ພາຫະນະ, ວັດຖຸອຸປະກອນ, ຄູ, ອາຈານ, ຜູ້ຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ການພັດທະນາບຸກຄະລາກອນດັ່ງກ່າວ ແນໃສ່ ເຮັດໃຫ້ກິລາ-ກາຍຍະກຳ ມີການຂະຫຍາຍຕົວຂຶ້ນເລື້ອຍໆ.

## ໝວດທີ 2
## ການພັດທະນາວິຊາການ ແລະ ວິທະຍາສາດ ກິລາ-ກາຍຍະກຳ

**ມາດຕາ 46. ວິຊາການ ແລະ ວິທະຍາສາດ**

ວິຊາການ ແລະ ວິທະຍາສາດ ກິລາ-ກາຍຍະກຳ ແມ່ນ ທິດສະດີ ແລະ ພຶດຕິກຳ ກ່ຽວກັບເຕັກນິກ, ຍຸດທະວິທີ ທີ່ສົມບູນ ຊຶ່ງໄດ້ຄົ້ນຄວ້າ, ວິໄຈ, ທົດລອງ ແລະ ຖືກນຳໃຊ້ເຂົ້າໃນການສິດສອນ, ອົບຮົມ, ຝຶກແອບ, ທົດສອບ, ສະແດງ ແລະ ແຂ່ງຂັນ ໃຫ້ມີປະສິດທິຜົນ.

**ມາດຕາ 47. ການພັດທະນາວິຊາການ ແລະ ວິທະຍາສາດ**

ການພັດທະນາວິຊາການ ແລະ ວິທະຍາສາດ ກິລາ-ກາຍຍະກຳ ແມ່ນ ການຄົ້ນຄວ້າ, ຊອກຮູ້, ວິໄຈ, ສະຫລຸບເປັນທິດສະດີ, ບົດຮຽນໃໝ່ ທີ່ທັນສະໄໝຂຶ້ນຢູ່ເລື້ອຍໆ ແລະ ນຳເອົາໄປປະຕິບັດຢູ່ໃນພຶດຕິກຳຕົວຈິງ ໃນການຝຶກແອບ, ທົດສອບ, ສະແດງ ແລະ ແຂ່ງຂັນ.

ການພັດທະນາວິຊາການ ແລະ ວິທະຍາສາດ ກິລາ-ກາຍຍະກຳ ແມ່ນ ຄວາມຮັບຜິດຊອບຂອງລັດ, ສັງຄົມ, ບຸກຄົນທັງພາຍໃນ ແລະ ຕ່າງປະເທດ ດ້ວຍການລົງທຶນເຂົ້າໃສ່ການຄົ້ນຄວ້າ, ວິໄຈ, ກໍ່ສ້າງພື້ນຖານວັດຖຸ, ສະໜອງພາຫະນະ, ອຸປະກອນ, ງົບປະມານ, ບຸກຄະລາກອນໃຫ້ແກ່ວຽກງານດັ່ງກ່າວ ເປັນຕົ້ນການສ້າງໂຮງຮຽນ, ສູນ, ສະຖາບັນການສຶກສາ, ສະຖາບັນວິທະຍາສາດການກິລາ.

## ໝວດທີ 3
## ການພັດທະນາພື້ນຖານໂຄງລ່າງ, ພາຫະນະ ແລະ ອຸປະກອນກິລາ-ກາຍຍະກຳ

**ມາດຕາ 48. ພື້ນຖານໂຄງລ່າງກິລາ-ກາຍຍະກຳ**

ພື້ນຖານໂຄງລ່າງກິລາ-ກາຍຍະກຳ ແມ່ນ ສະຖານທີ່ຮ່ຳຮຽນ, ຝຶກແອບ, ສະແດງ, ແຂ່ງຂັນ ຊຶ່ງມີດັ່ງນີ້ :

1. ໂຮງຮຽນ, ສູນ ແລະ ສະຖາບັນ ກິລາ-ກາຍຍະກຳ ທັງພາກລັດ ແລະ ເອກະຊົນ;
2. ສະໂມສອນ ກິລາ-ກາຍຍະກຳ;

3. ໂຮງຮຽນພອນສະຫວັນ ກິລາ-ກາຍຍະກຳ;
4. ສະຖານທີ່ຝຶກແອບ, ສະແດງ ແລະ ແຂ່ງຂັນ;
5. ສະຖານທີ່ບໍລິການ ກິລາ-ກາຍຍະກຳ.

**ມາດຕາ 49. ຄວາມຮັບຜິດຊອບໃນການພັດທະນາພື້ນຖານໂຄງລ່າງ, ພາຫະນະ ແລະ ອຸປະກອນ**

ການຈັດຕັ້ງ ແລະ ບຸກຄົນ ທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບຈັດສັນທີ່ດິນ, ສ້າງ ແລະ ປັບປຸງພື້ນຖານໂຄງລ່າງ, ປະກອບພາຫະນະ, ອຸປະກອນກິລາ-ກາຍຍະກຳທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ດີຂຶ້ນເລື້ອຍໆ ເປັນຕົ້ນ ຢູ່ໂຮງຮຽນ, ສະຖາບັນການສຶກສາ, ບ້ານ, ເມືອງ, ໂຮງງານ, ສຳນັກງານ, ອົງການ ແລະ ອື່ນໆ.

**ມາດຕາ 50. ຄວາມຮັບຜິດຊອບ ຂອງລັດ**

ລັດຖະບານ ມີຄວາມຮັບຜິດຊອບຈັດສັນທີ່ດິນ, ສ້າງພື້ນຖານໂຄງລ່າງ, ປະກອບພາຫະນະ, ອຸປະກອນກິລາ-ກາຍຍະກຳ ລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ເພື່ອຮອງຮັບການຝຶກແອບ, ສະແດງ, ແຂ່ງຂັນ ແລະ ເປັນເຈົ້າພາບຈັດການແຂ່ງຂັນລະດັບຕ່າງໆ.

## ໝວດທີ 4
## ການພັດທະນາການເຂົ້າຮ່ວມການແຂ່ງຂັນ
## ກິລາ-ກາຍຍະກຳ ລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ

**ມາດຕາ 51. ການພັດທະນາການເຂົ້າຮ່ວມການແຂ່ງຂັນ**

ການພັດທະນາການເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ປະກອບດ້ວຍຂັ້ນຕອນຕ່າງໆ ດັ່ງນີ້ :

1. ການວາງແຜນ;
2. ການຄັດເລືອກ ແລະ ເຕົ້າໂຮມ;
3. ການບຳລຸງ, ຝຶກແອບ;
4. ການທົດສອບ;
5. ການເຂົ້າຮ່ວມການແຂ່ງຂັນ;
6. ການສະຫລຸບ, ຍ້ອງຍໍ, ໃຫ້ລາງວັນ.

**ມາດຕາ 52. ການວາງແຜນ**

ເພື່ອເຮັດໃຫ້ການເຂົ້າຮ່ວມການແຂ່ງຂັນມີປະສິດທິຜົນ ຕ້ອງມີການກະກຽມຮອບດ້ານ ໃນນັ້ນແມ່ນ ການວາງ ແລະ ປະຕິບັດແຜນການທີ່ສອດຄ່ອງກັບສະພາບການຕົວຈິງ. ໃນແຜນການ ຕ້ອງກຳນົດເຖິງການຄັດເລືອກ, ເຕົ້າໂຮມ, ບຳລຸງ, ຝຶກແອບ, ທົດສອບນັກກິລາ-ກາຍຍະກຳ ພ້ອມທັງ ການກະກຽມບຸກຄະລາກອນອື່ນ, ສະຖານທີ່, ພາຫະນະ, ອຸປະກອນ ແລະ ງົບປະມານຮັບໃຊ້.

**ມາດຕາ 53. ການຄັດເລືອກ ແລະ ເຕົ້າໂຮມ ນັກກິລາ-ກາຍຍະກຳ**

ການຄັດເລືອກນັກກິລາ-ກາຍຍະກຳ ຕ້ອງດຳເນີນຢ່າງຖືກຕ້ອງຕາມ ຫຼັກການ, ມາດຕະຖານ, ວິທະຍາສາດ, ຄວາມສາມາດຕົວຈິງ, ຍຸຕິທຳ ເພື່ອໃຫ້ໄດ້ນັກກິລາ-ກາຍຍະກຳ ເປັນຕົ້ນ ຜູ້ທີ່ມີພອນສະຫວັນ, ຄວາມແຂງແຮງ, ຄວາມສາມາດ, ປະສົບການ ຢ່າງແທ້ຈິງ ແລະ ເຕົ້າໂຮມ ເຂົ້າສູນໃຫ້ທັນເວລາ.

**ມາດຕາ 54. ການບຳລຸງ, ຝຶກແອບ ນັກກິລາ-ກາຍຍະກຳ**

ການບຳລຸງ, ຝຶກແອບ ນັກກິລາ-ກາຍຍະກຳ ໃຫ້ປະຕິບັດຕາມແຜນການລວມຂອງການເຂົ້າຮ່ວມການແຂ່ງຂັນ ແລະ ການຝຶກແອບຂອງຄູຝຶກ ໂດຍອີງໃສ່ຈຸດພິເສດຂອງຕົນເອງ ແລະ ຄູ່ແຂ່ງຂັນ ເພື່ອໃຫ້ສາມາດຍາດໄດ້ໄຊຊະນະ.

**ມາດຕາ 55. ການທົດສອບນັກກິລາ-ກາຍຍະກຳ**

ຜ່ານການຝຶກແອບຢ່າງຕໍ່ເນື່ອງຕາມແຜນການທີ່ໄດ້ກຳນົດມາແລ້ວນັ້ນ ນັກກິລາ-ກາຍຍະກຳ ຕ້ອງໄດ້ຜ່ານການທົດສອບ ດ້ວຍການກວດກາ, ແຂ່ງຂັນ ເພື່ອປະເມີນຜົນດ້ານຄວາມຮູ້, ຄວາມສາມາດຂອງນັກກິລາ-ກາຍຍະກຳກ່ຽວກັບເຕັກນິກ, ຍຸດທະວິທີ, ພະລະກຳລັງ ແນໃສ່ ເສີມສ້າງ ແລະ ປັບປຸງຄຸນນະພາບຂອງນັກກິລາ-ກາຍຍະກຳ ກ່ອນການເຂົ້າຮ່ວມການແຂ່ງຂັນຕົວຈິງ.

**ມາດຕາ 56. ການເຂົ້າຮ່ວມການແຂ່ງຂັນ**

ນັກກິລາ-ກາຍຍະກຳ, ຄູຝຶກ, ຜູ້ບໍລິຫານການກິລາ ຕ້ອງໄດ້ຍົກສູງຈິດໃຈຊາດ, ຄວາມຮັບ ຜິດຊອບ, ຄວາມເສຍສະລະ, ຄວາມກ້າຫານ, ຄວາມອົດທົນ, ຄວາມສາມັກຄີ, ຄວາມເປັນເອກະພາບໃນທີມງານ, ມີນ້ຳໃຈນັກກິລາ, ສຸມທຸກສະຕິປັນຍາ ແລະ ທຸ່ມເທທຸກກຳລັງວັງຊາ ເຂົ້າໃນການແຂ່ງຂັນ ແນໃສ່ ໃຫ້ສາມາດຍາດໄດ້ໄຊຊະນະ ແລະ ກຽດຊື່ສຽງ.

**ມາດຕາ 57. ການສະຫຼຸບ, ຍ້ອງຍໍ, ໃຫ້ລາງວັນ ນັກກິລາ-ກາຍຍະກຳ**

ຜ່ານການເຂົ້າຮ່ວມການແຂ່ງຂັນແຕ່ລະຄັ້ງ ຕ້ອງມີການສະຫຼຸບ ຕີລາຄາ, ຖອດຖອນບົດຮຽນ. ສຳລັບ ຜູ້ໄດ້ຮັບໄຊຊະນະ ນອກຈາກລາງວັນທີ່ໄດ້ຮັບຈາກການແຂ່ງຂັນແລ້ວ ຍັງໄດ້ຄ່າບຳເນັດ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຈາກລັດ ແລະ ສັງຄົມ ຢ່າງເໝາະສົມ.

ການປະຕິບັດນະໂຍບາຍລະອຽດຕໍ່ຜູ້ໄດ້ຮັບໄຊຊະນະນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 5
## ການພັດທະນາການຈັດການແຂ່ງຂັນ
## ກິລາ-ກາຍຍະກຳ ລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ

**ມາດຕາ 58. ການພັດທະນາການຈັດການແຂ່ງຂັນ**

ການພັດທະນາການຈັດການແຂ່ງຂັນກິລາ-ກາຍຍະກຳ ລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ຢູ່ ສປປ ລາວ ປະກອບດ້ວຍວຽກງານຕົ້ນຕໍ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບ ແລະ ກຳມະການ ດ້ານຕ່າງໆ;

2. ສ້າງກົດລະບຽບ;

3. ກະກຽມສະຖານທີ່, ການຂົນສົ່ງ, ພິທີເປີດ-ປິດ;

4. ໂຄສະນາ, ປຸກລະດົມມວນຊົນເຂົ້າຮ່ວມ;

5. ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ.

**ມາດຕາ 59. ຄະນະຮັບຜິດຊອບຈັດການແຂ່ງຂັນ**

ໃນການຈັດການແຂ່ງຂັນກິລາ-ກາຍຍະກຳແຕ່ລະລະດັບ ຕ້ອງມີການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ກຳມະການ ດ້ານຕ່າງໆ ຄື: ດ້ານເຕັກນິກ, ສະຖານທີ່ແຂ່ງຂັນ, ການປ້ອງກັນຄວາມສະຫງົບ, ແພດ, ທີ່ພັກ-ອາຫານ, ການຂົນສົ່ງ ແລະ ອື່ນໆ.

ຄະນະຮັບຜິດຊອບ ແລະ ກຳມະການຈັດການແຂ່ງຂັນດ້ານຕ່າງໆ ຕ້ອງໄດ້ກຳນົດສິດ, ໜ້າທີ່, ຄວາມຮັບຜິດຊອບໃຫ້ລະອຽດ, ຄົບຖ້ວນ ແລະ ແບ່ງງານກັນຢ່າງຈະແຈ້ງ.

**ມາດຕາ 60. ກົດລະບຽບ**

ໃນການຈັດການແຂ່ງຂັນກິລາ-ກາຍຍະກຳແຕ່ລະລະດັບ ຄະນະຮັບຜິດຊອບ ແລະ ກຳມະການດ້ານຕ່າງໆ ຕ້ອງວາງຂໍ້ກຳນົດ, ກົດລະບຽບ, ກະຕິກາການແຂ່ງຂັນໃຫ້ເໝາະສົມ ຕາມຄວາມເປັນຈິງຂອງການແຂ່ງຂັນດັ່ງກ່າວ ແລະ ສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ, ກົດລະບຽບ ແລະ ກະຕິກາຂອງສາກົນ.

**ມາດຕາ 61. ສະຖານທີ່, ການຂົນສົ່ງ ແລະ ພິທີເປີດ-ປິດ**

ເພື່ອກະກຽມໃຫ້ແກ່ການເປັນເຈົ້າພາບຈັດການແຂ່ງຂັນ ລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ຢູ່ ສປປ ລາວ ຕ້ອງມີສະຖານທີ່ຝຶກແອບ, ສະແດງ ແລະ ແຂ່ງຂັນ ລວມທັງ ທີ່ພັກ-ອາຫານ, ພາຫະນະຂົນສົ່ງ, ອຸປະກອນກິລາ-ກາຍຍະກຳ ທີ່ໄດ້ມາດຕະຖານຂອງປະເພດກິລາ-ກາຍຍະກຳ ທີ່ທຳການແຂ່ງຂັນນັ້ນ. ພ້ອມກັນນີ້ ກໍຕ້ອງກະກຽມພິທີເປີດ-ປິດ ຢ່າງເໝາະສົມ.

**ມາດຕາ 62. ການໂຄສະນາ, ປຸກລະດົມມວນຊົນເຂົ້າຮ່ວມ**

ໃນການເປັນເຈົ້າພາບຈັດການແຂ່ງຂັນ ລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ຢູ່ ສປປ ລາວ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ເປັນຕົ້ນ ຄະນະຮັບຜິດຊອບຈັດການແຂ່ງຂັນ ຕ້ອງເອົາໃຈໃສ່ໂຄສະນາ, ປຸກລະດົມ ເພື່ອໃຫ້ມວນຊົນ ມີຄວາມຕື່ນຕົວເຂົ້າຮ່ວມ ແລະ ເປັນເຈົ້າພາບຮ່ວມກັນ.

**ມາດຕາ 63. ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ**

ການຈັດການແຂ່ງຂັນແຕ່ລະຄັ້ງ ຕ້ອງຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພ ກ່ອນການແຂ່ງຂັນ, ໄລຍະແຂ່ງຂັນ ແລະ ຫລັງການແຂ່ງຂັນ. ເພື່ອຮັບປະກັນວຽກງານດັ່ງກ່າວ ນອກຈາກຄະນະຮັບຜິດຊອບດ້ານຄວາມສະຫງົບ ເປັນກຳລັງຫຼັກແຫລ່ງແລ້ວ ການຈັດຕັ້ງ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ຕ້ອງມີຄວາມຮັບຜິດຊອບເຂົ້າຮ່ວມໃນວຽກງານປ້ອງກັນຄວາມສະຫງົບ ອີກດ້ວຍ.

## ໝວດທີ 6
## ທຸລະກິດກິລາ-ກາຍຍະກຳ

**ມາດຕາ 64. ທຸລະກິດກິລາ-ກາຍຍະກຳ**

ທຸລະກິດກິລາ-ກາຍຍະກຳ ແມ່ນ ການລົງທຶນພັດທະນາກິລາ-ກາຍຍະກຳ ເພື່ອເປັນການຫາລາຍໄດ້ ແລະ ຜົນຕອບແທນທາງດ້ານເສດຖະກິດ ຊຶ່ງປະກອບດ້ວຍທຸລະກິດຕົ້ນຕໍ ດັ່ງນີ້:

1. ການເຄື່ອນໄຫວຈັດການແຂ່ງຂັນກິລາ-ກາຍຍະກຳ;
2. ການຜະລິດ ແລະ ນຳເຂົ້າ ພາຫະນະ, ວັດຖຸອຸປະກອນ, ການອອກແບບ ແລະ ການສ້າງພື້ນຖານໂຄງລ່າງ ກິລາ-ກາຍຍະກຳ;
3. ການບໍລິການ ກ່ຽວກັບກິລາ-ກາຍຍະກຳ.

**ມາດຕາ 65. ການສ້າງຕັ້ງ ແລະ ດຳເນີນທຸລະກິດກິລາ-ກາຍຍະກຳ**

ບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ສາມາດສ້າງຕັ້ງວິສາຫະກິດ ຫລື ສະໂມສອນເພື່ອດຳເນີນທຸລະກິດກິລາ-ກາຍຍະກຳໄດ້. ການສ້າງຕັ້ງ ແລະ ດຳເນີນທຸລະກິດດັ່ງກ່າວ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການ ກິລາ-ກາຍຍະກຳ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ເງື່ອນໄຂການສ້າງຕັ້ງ ແລະ ດຳເນີນທຸລະກິດກິລາ-ກາຍຍະກຳ ມີດັ່ງນີ້:

1. ມີສຳນັກງານ ຢູ່ ສປປ ລາວ;
2. ມີພື້ນຖານໂຄງລ່າງ, ພາຫະນະ, ວັດຖຸອຸປະກອນ ຮັບໃຊ້ການເຄື່ອນໄຫວ;
3. ມີບຸກຄະລາກອນທີ່ມີວິຊາສະເພາະ;
4. ມີແຫລ່ງການເງິນ ເພື່ອສາມາດເຄື່ອນໄຫວ.

ການຮ້ອງຂໍ ເພື່ອດຳເນີນທຸລະກິດກິລາ-ກາຍຍະກຳ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 66. ສິດ ແລະ ໜ້າທີ່ ຂອງວິສາຫະກິດກິລາ - ກາຍຍະກຳ**

ວິສາຫະກິດກິລາ-ກາຍຍະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ເຄື່ອນໄຫວທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຕາມລະບຽບກົດໝາຍ;
3. ປະຕິບັດພັນທະເສຍພາສີ, ອາກອນ, ຄ່າທຳນຽມ, ການບໍລິການຕ່າງໆ ໃຫ້ລັດ ຕາມລະບຽບກົດໝາຍ;
4. ປົກປັກຮັກສາສິ່ງແວດລ້ອມ, ຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ, ຮັບປະກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## ໝວດທີ 7
## ການໂຄສະນາກິລາ-ກາຍຍະກຳ

**ມາດຕາ 67. ການໂຄສະນາກິລາ-ກາຍຍະກຳ**

ການໂຄສະນາກິລາ-ກາຍຍະກຳ ແມ່ນ ການສຶກສາອົບຮົມ, ເຜີຍແຜ່, ແນະນຳ, ການປະຊາສຳພັນ ໃຫ້ສັງຄົມ ຮູ້ໄດ້ຄຸນປະໂຫຍດ, ຈຸດປະສົງ, ຂະບວນການ, ວິທີການເຄື່ອນໄຫວ, ເຕັກນິກຂອງກິລາ-ກາຍຍະກຳ ແລະ ອື່ນໆ ແນໃສ່ ສ້າງຄ່ານິຍົມ, ສ້າງສະຕິຊາດ, ລະບຽບວິໄນ, ຈັນຍາບັນ ແລະ ເຮັດໃຫ້ສັງຄົມໄດ້ເຂົ້າຮ່ວມການເຄື່ອນໄຫວນັບມື້ນັບກວ້າງຂວາງ ແລະ ມີການພັດທະນາກິລາ-ກາຍຍະກຳໃຫ້ນັບມື້ນັບດີຂຶ້ນ.

**ມາດຕາ 68. ເນື້ອໃນໂຄສະນາ**

ເນື້ອໃນໂຄສະນາ ປະກອບດ້ວຍ:

1. ການສະໜອງຄວາມຮູ້ທົ່ວໄປກ່ຽວກັບກົດລະບຽບ, ກະຕິກາ, ຫຼັກການ, ການເຄື່ອນໄຫວ, ການຝຶກແອບ, ການສະແດງ, ການແຂ່ງຂັນກິລາ-ກາຍຍະກຳ;
2. ການເຜີຍແຜ່ຄຸນປະໂຫຍດ, ເຕັກນິກ, ຍຸດທະວິທີ, ວິທະຍາສາດ, ຄູ່ມືການສິດສອນ ກ່ຽວກັບກິລາ-ກາຍຍະກຳຕ່າງໆ;
3. ການປຸກລະດົມ, ຂົນຂວາຍ ໃຫ້ສັງຄົມເຂົ້າຮ່ວມການເຄື່ອນໄຫວ ຢ່າງກວ້າງຂວາງ, ພັດທະນາກິລາ-ກາຍຍະກຳ ດ້ວຍການປະກອບແຫຼ່ງທຶນ, ສະໜອງພາຫະນະ, ວັດຖຸອຸປະກອນໃຫ້ແກ່ວຽກງານດັ່ງກ່າວ;
4. ການເຜີຍແຜ່ຜົນສຳເລັດ, ຜົນງານ, ການເຂົ້າຮ່ວມການແຂ່ງຂັນຂອງນັກກິລາ-ກາຍຍະກຳແຕ່ລະລຸ້ນ, ແຕ່ລະຄັ້ງ;
5. ການພົວພັນ, ຮ່ວມມື, ແລກປ່ຽນບົດຮຽນ ດ້ານກິລາ-ກາຍຍະກຳກັບຕ່າງປະເທດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ.

**ມາດຕາ 69. ຮູບການ ແລະ ວິທີການໂຄສະນາກິລາ-ກາຍຍະກຳ**

ການໂຄສະນາກິລາ-ກາຍຍະກຳ ນຳໃຊ້ຮູບການ ແລະ ວິທີການ ດັ່ງນີ້ :

1. ຜ່ານລະບົບສື່ມວນຊົນຂອງພາກລັດ ແລະ ເອກະຊົນ ເຊັ່ນ: ສິ່ງພິມ, ວິທະຍຸ, ໂທລະພາບ ແລະ ອື່ນໆ;
2. ຜ່ານການປະຊາສຳພັນໃນງານແຂ່ງຂັນກິລາ-ກາຍຍະກຳ ເປັນຕົ້ນ ງານມະຫາກຳກິລາແຫ່ງຊາດ;
3. ຜ່ານລະບົບສື່ສານເອເລັກໂຕຼນິກ ເຊັ່ນ: ອິນເຕີເນັດ, ອີເມລ, ເວບໄຊ;
4. ຜ່ານຮູບການ ແລະ ວິທີການໂຄສະນາອື່ນ.

## ໝວດທີ 8
## ກອງທຶນກິລາ-ກາຍຍະກຳ

**ມາດຕາ 70. ການສ້າງຕັ້ງກອງທຶນ**

ລັດ ສົ່ງເສີມໃຫ້ມີການສ້າງຕັ້ງກອງທຶນຂຶ້ນ ເພື່ອພັດທະນາກິລາ-ກາຍຍະກຳໃຫ້ກວ້າງຂວາງ, ກ້າວໜ້າ, ທັນສະໄໝ ແລະ ມີຄຸນນະພາບສູງຂຶ້ນເທື່ອລະກ້າວ.

**ມາດຕາ 71. ແຫຼ່ງກອງທຶນ**

ກອງທຶນກິລາ-ກາຍຍະກຳ ແມ່ນ ໄດ້ມາຈາກ :

1. ງົບປະມານຂອງລັດ;
2. ລາຍໄດ້ຈາກການຈັດການແຂ່ງຂັນ ແລະ ລາຍໄດ້ອື່ນ ທີ່ຖືກຕ້ອງຕາມລະບຽບກົດໝາຍ ເປັນຕົ້ນ ການຂາຍລິຂະສິດ ກ່ຽວກັບກິລາ-ກາຍຍະກຳ ຊະນິດໃດໜຶ່ງ;
3. ການອຸປະຖຳຈາກບຸກຄົນ ແລະ ການຈັດຕັ້ງ;
4. ການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ.

**ມາດຕາ 72. ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ ກິລາ-ກາຍຍະກຳ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ IV
# ການຈັດຕັ້ງກິລາ-ກາຍຍະກຳທາງສັງຄົມ

## ໝວດທີ 1
## ຄະນະກຳມະການກິລາໂອແລມປິກແຫ່ງຊາດລາວ

**ມາດຕາ 73. ຄະນະກຳມະການກິລາໂອແລມປິກແຫ່ງຊາດລາວ**

ຄະນະກຳມະການກິລາໂອແລມປິກແຫ່ງຊາດລາວ ມີຊື່ຫຍໍ້ວ່າ “ ຄອລ ” ເປັນອົງການຈັດຕັ້ງທາງສັງຄົມ ກ່ຽວກັບກິລາ-ກາຍຍະກຳ ຊຶ່ງເປັນຕົວແທນໃຫ້ແກ່ ສປປ ລາວ ໃນການເຂົ້າຮ່ວມຂະບວນການເຄື່ອນໄຫວກິລາໂອແລມປິກ ສາກົນ, ພາກພື້ນ ແລະ ອານຸພາກພື້ນ, ມີພາລະບົດບາດພັດທະນາກິລາ-ກາຍຍະກຳລາວ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ໃນເວທີສາກົນ.

**ມາດຕາ 74. ສິດ ແລະ ໜ້າທີ່ ຂອງຄະນະກຳມະການໂອແລມປິກແຫ່ງຊາດລາວ**

**ຄະນະກຳມະການໂອແລມປິກແຫ່ງຊາດລາວ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :**

1. ເຂົ້າຮ່ວມການສ້າງຕັ້ງ ແລະ ພັດທະນາຂະບວນການກິລາ-ກາຍຍະກຳ ພາຍໃນປະເທດ;
2. ໂຄສະນາ ເຜີຍແຜ່ ໃຫ້ສັງຄົມ ຮູ້ໄດ້ຄຸນປະໂຫຍດຂອງກິລາ-ກາຍຍະກຳ, ມີຄວາມມັກ ແລະ ມີ ນ້ຳໃຈນັກກິລາ;
3. ສະໜັບສະໜູນສະຫະພັນກິລາ-ກາຍຍະກຳແຫ່ງຊາດ, ຂະແໜງການ ແລະ ທ້ອງຖິ່ນ;
4. ນຳໃຊ້ເງິນຊ່ວຍເຫຼືອ, ອຸປະຖຳຈາກອົງການໂອແລມປິກ ອານຸພາກພື້ນ, ພາກພື້ນ ແລະ ສາກົນ ຕາມລະບຽບການ;
5. ປະສານສົມທົບກັບຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ເພື່ອພັດທະນາກິລາ-ກາຍຍະກຳ ປະເພດຕ່າງໆ ໃຫ້ໄດ້ຕາມມາດຕະຖານສາກົນເທື່ອລະກ້າວ;
6. ສົມທົບກັບຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ກຽມເຂົ້າຮ່ວມງານແຂ່ງຂັນກິລາ-ກາຍຍະກຳໃນລະດັບ ອານຸພາກພື້ນ, ພາກພື້ນ ແລະ ສາກົນ ຫລື ການເປັນເຈົ້າພາບງານກິລາ-ກາຍຍະກຳ ລະດັບຕ່າງໆ;

7. ເຂົ້າຮ່ວມເຄື່ອນໄຫວກິດຈະກຳກິລາ-ກາຍຍະກຳ ທີ່ຄະນະກຳມະການໂອແລມປິກສາກົນ ຮັບຮອງ ແລະ ວາງອອກ ເຊັ່ນ: ຊີເກມ, ເອຊຽນເກມ, ໂອແລມປິກເກມ;
8. ເປັນຕົວແທນຂອງຊາດ ໃນການເຄື່ອນໄຫວ, ພົວພັນ, ຮ່ວມມືກັບການຈັດຕັ້ງກິລາໂອແລມປິກຂອງຕ່າງປະເທດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ;
9. ສາມາດຖືກຄັດເລືອກເຂົ້າໃນ ຄະນະບໍລິຫານງານຂອງຄະນະກຳມະການໂອແລມປິກ ອານຸພາກພື້ນ, ພາກພື້ນ ແລະ ສາກົນ;
10. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ຖອດຖອນບົດຮຽນ, ລາຍງານຕໍ່ຂັ້ນເທິງ ກ່ຽວກັບການເຄື່ອນໄຫວຂອງຕົນ ຢ່າງເປັນປົກກະຕິ.

## ໝວດທີ 2
## ສະຫະພັນກິລາ-ກາຍຍະກຳ

### ມາດຕາ 75. ສະຫະພັນກິລາ-ກາຍຍະກຳ

ສະຫະພັນກິລາ-ກາຍຍະກຳ ແມ່ນ ອົງການຈັດຕັ້ງທາງສັງຄົມ ກ່ຽວກັບກິລາ-ກາຍຍະກຳ ປະເພດໃດໜຶ່ງ, ມີພາລະບົດບາດເຄື່ອນໄຫວ ແລະ ພັດທະນາກິລາ-ກາຍຍະກຳປະເພດດັ່ງກ່າວ ໃຫ້ກ້າວໜ້າຂື້ນເລື້ອຍໆ.

ສະຫະພັນກິລາ-ກາຍຍະກຳ ມີ ສອງຂັ້ນ ຄື:

1. ສະຫະພັນກິລາ-ກາຍຍະກຳແຫ່ງຊາດ ໂດຍແມ່ນ ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ເປັນຜູ້ອະນຸມັດ ແລະ ຄຸ້ມຄອງ;
2. ສະຫະພັນກິລາ-ກາຍຍະກຳຂັ້ນແຂວງ ໂດຍແມ່ນ ພະແນກກິລາ-ກາຍຍະກຳຂັ້ນແຂວງ ເປັນຜູ້ອະນຸມັດ ແລະ ຄຸ້ມຄອງ.

### ມາດຕາ 76. ສິດ ແລະ ໜ້າທີ່ ຂອງສະຫະພັນກິລາ-ກາຍຍະກຳແຫ່ງຊາດ

**ສະຫະພັນກິລາ-ກາຍຍະກຳແຫ່ງຊາດ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :**

1. ເປັນຕົວແທນຂອງຊາດ ເພື່ອເຄື່ອນໄຫວໃນລະດັບ ອານຸພາກພື້ນ, ພາກພື້ນ ແລະ ສາກົນ;
2. ພັດທະນານັກກິລາ, ບຸກຄະລາກອນກິລາ, ພື້ນຖານໂຄງລ່າງ, ສະໜອງພາຫະນະ, ອຸປະກອນກິລາປະເພດທີ່ກ່ຽວຂ້ອງ;
3. ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳ ປະເພດໃດໜຶ່ງໃນລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ;
4. ຈັດການແຂ່ງຂັນກິລາ-ກາຍຍະກຳໃນລະດັບຊາດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນຢູ່ ສປປ ລາວ;
5. ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອຈາກສັງຄົມ, ສະຫະພັນກິລາ ອານຸພາກພື້ນ, ພາກພື້ນ ແລະ ສາກົນ ເພື່ອພັດທະນາກິລາ-ກາຍຍະກຳຂອງຊາດ;
6. ສະໜັບສະໜູນ ແລະ ຊ່ວຍເຫຼືອສະຫະພັນກິລາ-ກາຍຍະກຳຂັ້ນແຂວງ;
7. ສາມາດຖືກຄັດເລືອກເຂົ້າໃນ ຄະນະບໍລິຫານງານຂອງ ສະຫະພັນກິລາອານຸພາກພື້ນ, ພາກພື້ນ ແລະ ສາກົນ;

8. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ຖອດຖອນບົດຮຽນ, ລາຍງານຕໍ່ຂັ້ນເທິງ ກ່ຽວກັບການເຄື່ອນໄຫວຂອງຕົນຢ່າງເປັນປົກກະຕິ ລວມທັງ ການສະເໜີປະຕິບັດນະໂຍບາຍຕໍ່ນັກກິລາ ແລະ ບຸກຄະລາກອນກິລາ.

**ມາດຕາ 77. ສິດ ແລະ ໜ້າທີ່ ຂອງສະຫະພັນກິລາ-ກາຍຍະກຳຂັ້ນແຂວງ**

**ສະຫະພັນກິລາ-ກາຍຍະກຳຂັ້ນແຂວງ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:**

1. ຄັດເລືອກ, ຝຶກແອບ, ທົດສອບນັກກິລາຂັ້ນແຂວງ ແລະ ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳ ພາຍໃນ ແລະ ຕ່າງປະເທດ;
2. ຈັດການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນກິລາປະເພດຂອງຕົນ;
3. ຈັດການແຂ່ງຂັນປະຈຳປີ ແລະ ຈັດກິດຈະກຳກິລາ-ກາຍຍະກຳຂັ້ນແຂວງ;
4. ປຸກລະດົມ, ຂົນຂວາຍ, ຊອກແຫລ່ງທຶນ ເພື່ອການເຄື່ອນໄຫວກິລາ-ກາຍຍະກຳຂອງຕົນ;
5. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ຖອດຖອນບົດຮຽນ, ລາຍງານຕໍ່ຂັ້ນເທິງ ກ່ຽວກັບການເຄື່ອນໄຫວຂອງຕົນຢ່າງເປັນປົກກະຕິ ລວມທັງ ການສະເໜີປະຕິບັດນະໂຍບາຍຕໍ່ນັກກິລາ ແລະ ບຸກຄະລາກອນກິລາ.

## ໝວດທີ 3
## ສະມາຄົມກິລາ-ກາຍຍະກຳ

**ມາດຕາ 78 . ສະມາຄົມກິລາ-ກາຍຍະກຳ**

ສະມາຄົມກິລາ-ກາຍຍະກຳ ແມ່ນ ອົງການຈັດຕັ້ງທາງສັງຄົມ ຂອງກະຊວງ, ອົງການ, ແຂວງ, ນະຄອນ ໂດຍແມ່ນ ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ແຕ່ງຕັ້ງ ແລະ ຮັບຮູ້ໂດຍຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ, ມີພາລະບົດບາດເຄື່ອນໄຫວ ແລະ ພັດທະນາກິລາ-ກາຍຍະກຳປະເພດຕ່າງໆຂອງຕົນ ໃຫ້ກ້າວໜ້າຂຶ້ນເລື້ອຍໆ.

**ມາດຕາ 79. ສິດ ແລະ ໜ້າທີ່ ຂອງສະມາຄົມກິລາ-ກາຍຍະກຳ**

ສະມາຄົມກິລາ-ກາຍຍະກຳ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ເຂົ້າຮ່ວມການສ້າງຕັ້ງ ແລະ ພັດທະນາຂະບວນການກິລາ-ກາຍຍະກຳພາຍໃນ ກະຊວງ, ອົງການ, ແຂວງ, ນະຄອນ;
2. ໂຄສະນາ ເຜີຍແຜ່ໃຫ້ສັງຄົມ ຮູ້ໄດ້ຄຸນປະໂຫຍດຂອງກິລາ-ກາຍຍະກຳ, ມີຄວາມມັກ ແລະ ມີນ້ຳໃຈນັກກິລາ;
3. ສະໜັບສະໜູນການຈັດຕັ້ງເຄື່ອນໄຫວ ແລະ ພັດທະນາກິລາ-ກາຍຍະກຳ ຢູ່ໃນຂະແໜງການ ແລະ ທ້ອງຖິ່ນ ຂອງຕົນ;
4. ປຸກລະດົມ, ຂົນຂວາຍ, ຊອກແຫລ່ງທຶນ ເພື່ອການເຄື່ອນໄຫວກິລາ-ກາຍຍະກຳ ໃນສະມາຄົມຂອງຕົນ;

5. ເຂົ້າຮ່ວມເຄື່ອນໄຫວ ພົວພັນ, ຮ່ວມມືກັບການຈັດຕັ້ງກິລາ-ກາຍຍະກໍາ ຢູ່ພາຍໃນ ແລະ ຕ່າງປະເທດ;
6. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ຖອດຖອນບົດຮຽນ, ລາຍງານຕໍ່ຂັ້ນເທິງ ກ່ຽວກັບການເຄື່ອນໄຫວຂອງຕົນຢ່າງເປັນປົກກະຕິ ລວມທັງ ການສະເໜີປະຕິບັດນະໂຍບາຍຕໍ່ນັກກິລາ ແລະ ບຸກຄະລາກອນກິລາ.

## ໝວດທີ 4
## ສະໂມສອນກິລາ-ກາຍຍະກໍາ

**ມາດຕາ 80. ສະໂມສອນກິລາ-ກາຍຍະກໍາ**

ສະໂມສອນກິລາ-ກາຍຍະກໍາ ມີສອງປະເພດ ຄື ສະໂມສອນກິລາ-ກາຍຍະກໍາ ສະໝັກຫຼິ້ນ ແລະ ອາຊີບ.

ສະໂມສອນກິລາ-ກາຍຍະກໍາສະໝັກຫຼິ້ນ ແມ່ນ ການຈັດຕັ້ງ ຫຼື ບຸກຄົນ ເປັນຜູ້ສ້າງຕັ້ງຂຶ້ນ ໂດຍມີການຮັບຮອງຈາກສະຫະພັນ ຫລື ສະມາຄົມກິລາ-ກາຍຍະກໍາທີ່ກ່ຽວຂ້ອງ ແລະ ອົງການຄຸ້ມຄອງກິລາ-ກາຍຍະກໍາຂັ້ນນັ້ນ.

ສະໂມສອນກິລາ-ກາຍຍະກໍາສະໝັກຫຼິ້ນ ຕ້ອງເປັນສະມາຊິກຂອງສະຫະພັນກິລາ-ກາຍຍະກໍາແຫ່ງຊາດ, ມີຄະນະບໍລິຫານງານຂອງສະໂມສອນ, ມີບຸກຄະລາກອນກິລາ, ມີພື້ນຖານໂຄງລ່າງ, ວັດຖຸອຸປະກອນ, ການເງິນ, ລະບຽບການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສະໂມສອນ.

ສະໂມສອນກິລາ-ກາຍຍະກໍາອາຊີບ ແມ່ນ ການຈັດຕັ້ງ ຫຼື ບຸກຄົນ ເປັນຜູ້ສ້າງຕັ້ງຂຶ້ນ ໂດຍໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງກິລາ-ກາຍຍະກໍາຂັ້ນນັ້ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອກໍ່ສ້າງ, ຝຶກແອບນັກກິລາ ແລະ ແຂ່ງຂັນເປັນອາຊີບ.

ສະໂມສອນກິລາ-ກາຍຍະກໍາອາຊີບ ເປັນ ວິສາຫະກິດດ້ານກິລາ-ກາຍຍະກໍາ.

**ມາດຕາ 81. ສິດ ແລະ ໜ້າທີ່ ຂອງສະໂມສອນ ກິລາ-ກາຍຍະກໍາ**

ສະໂມສອນກິລາ-ກາຍຍະກໍາ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ພັດທະນາ ນັກກິລາ, ບຸກຄະລາກອນກິລາ, ພື້ນຖານໂຄງລ່າງ, ສະໜອງພາຫະນະ, ອຸປະກອນກິລາ-ກາຍຍະກໍາ ໃຫ້ສະໂມສອນຂອງຕົນ;
2. ເຂົ້າຮ່ວມ ແລະ ຈັດການແຂ່ງຂັນກິລາ-ກາຍຍະກໍາ ໃນລະດັບຕ່າງໆ;
3. ປຸກລະດົມ, ຂົນຂວາຍ, ຊອກແຫລ່ງທຶນ ເພື່ອການເຄື່ອນໄຫວກິລາ-ກາຍຍະກໍາ ໃນສະໂມສອນຂອງຕົນ;
4. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ຖອດຖອນບົດຮຽນ, ລາຍງານຕໍ່ຂັ້ນເທິງ ກ່ຽວກັບການເຄື່ອນໄຫວຂອງຕົນຢ່າງເປັນປົກກະຕິ ລວມທັງ ການສະເໜີປະຕິບັດນະໂຍບາຍຕໍ່ນັກກິລາ ແລະ ບຸກຄະລາກອນກິລາ.

## ພາກທີ V
## ຂໍ້ຫ້າມໃນການເຄື່ອນໄຫວກິລາ-ກາຍຍະກຳ

**ມາດຕາ 82. ຂໍ້ຫ້າມສໍາລັບນັກກິລາ-ກາຍຍະກໍາ**

ຂໍ້ຫ້າມສໍາລັບນັກກິລາ-ກາຍຍະກໍາ ມີດັ່ງນີ້ :

1. ຫ້າມໃຊ້ສານກະຕຸ້ນ ໃນເວລາຝຶກແອບ, ສະແດງ ແລະ ແຂ່ງຂັນ;
2. ຫ້າມໃຊ້ພຶດຕິກຳ, ອາລົມຈິດ ທີ່ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ກຽດສັກສີ, ຊີວິດ, ຊັບສິນຂອງຄົນອື່ນ ໂດຍເຈດຕະນາ ທີ່ບໍ່ຖືກຕ້ອງຕາມກົດລະບຽບ ແລະ ກະຕິກາ;
3. ຫ້າມໃຊ້ການແຂ່ງຂັນກິລາ-ກາຍຍະກຳ ເປັນການພະນັນ;
4. ຫ້າມພົວພັນສິ່ງເສບຕິດ, ສິ່ງລາມົກອະນາຈານ;
5. ຫ້າມໃຫ້ ແລະ ຮັບ ສິນບົນ, ສວຍໂອກາດສໍ້ໂກງໃນການເຄື່ອນໄຫວກິລາ-ກາຍຍະກຳ ເຮັດໃຫ້ເຊື່ອມເສຍກຽດສັກສີ ຂອງທີມງານ ແລະ ປະເທດຊາດ.

**ມາດຕາ 83. ຂໍ້ຫ້າມສໍາລັບບຸກຄະລາກອນກິລາ**

ຂໍ້ຫ້າມສໍາລັບ ຄູຝຶກ, ກໍາມະການຕັດສິນ, ຜູ້ບໍລິຫານການກິລາ, ແພດກິລາ, ນັກຈິດຕະສາດ, ນັກວິທະຍາສາດ ການກິລາ, ຜູ້ຊ່ຽວຊານ ມີດັ່ງນີ້ :

1. ຫ້າມຂັດຂວາງ, ກົ່ນແກ້ງ ການເຄື່ອນໄຫວກິລາ-ກາຍຍະກຳ ຂອງບຸກຄົນ ແລະ ການຈັດຕັ້ງ;
2. ຫ້າມສວຍໃຊ້ໜ້າທີ່, ຕໍາແໜ່ງ, ສິດອຳນາດຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວທີ່ບໍ່ຊອບທຳ;
3. ຫ້າມມີການລຳອຽງໃນການຄັດເລືອກ, ຝຶກແອບ, ທົດສອບ ນັກກິລາ-ກາຍຍະກຳ, ການຕັດສິນທີ່ບໍ່ຍຸຕິທຳ ໃນເວລາສະແດງ, ແຂ່ງຂັນ;
4. ຫ້າມໃຊ້ອາລົມຮ້າຍດ່າ, ໃຊ້ຄວາມຫຍາບຊ້າ, ທ່າທີ ທີ່ບໍ່ເໝາະສົມ ແກ່ບຸກຄົນອື່ນ ເປັນຕົ້ນ ນັກກິລາ-ກາຍຍະກຳ ໃນເວລາສະແດງ, ແຂ່ງຂັນ;
5. ຫ້າມສວຍໃຊ້ ກິລາ-ກາຍຍະກຳ ເປັນການພະນັນ, ໃຫ້ ແລະ ຮັບສິນບົນ.

**ມາດຕາ 84. ຂໍ້ຫ້າມສໍາລັບຜູ້ດຳເນີນທຸລະກິດ ກິລາ-ກາຍຍະກຳ**

ຂໍ້ຫ້າມສໍາລັບຜູ້ດຳເນີນທຸລະກິດກິລາ-ກາຍຍະກຳ ມີດັ່ງນີ້ :

1. ຫ້າມດຳເນີນທຸລະກິດກິລາ-ກາຍຍະກຳ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ຫ້າມດຳເນີນທຸລະກິດກິລາ-ກາຍຍະກຳ ທີ່ບໍ່ສອດຄ່ອງກັບແຜນພັດທະນາການກິລາ-ກາຍຍະກຳ ຂອງທ້ອງຖິ່ນ ຫລື ຂອງຊາດ;
3. ຫ້າມດຳເນີນທຸລະກິດກິລາ-ກາຍຍະກຳ ທີ່ຜິດຕໍ່ລະບຽບກົດໝາຍ, ຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ;
4. ຫ້າມດຳເນີນທຸລະກິດກິລາ-ກາຍຍະກຳ ເພື່ອການພະນັນ, ພົວພັນກັບສິ່ງເສບຕິດ, ໂຄສະນາເຜີຍແຜ່ສາສະໜາ ແລະ ທຳລາຍສິ່ງແວດລ້ອມ.

**ມາດຕາ 85. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຂໍ້ຫ້າມສຳລັບ ບຸກຄົນ ແລະ ການຈັດຕັ້ງອື່ນ ມີດັ່ງນີ້ :

1. ຫ້າມນຳໃຊ້ການຫຼິ້ນ, ການແຂ່ງຂັນ ກິລາ-ກາຍຍະກຳ ເພື່ອການພະນັນ;
2. ຫ້າມນຳໃຊ້ ກິລາ-ກາຍຍະກຳ ທີ່ແຕະຕ້ອງເຖິງຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ແລະ ບຸກຄົນ, ກໍ່ຄວາມເສຍຫາຍຕໍ່ກຽດສັກສີ, ສຸຂະພາບ, ຊີວິດ, ຊັບສິນຂອງຜູ້ອື່ນ, ຝ່າຝືນຄຸນນະທຳ, ຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ;
3. ຫ້າມໃຊ້ອາລົມຮ້າຍດ່າ, ໃຊ້ຄວາມຫຍາບຊ້າ, ທ່າທີ ທີ່ບໍ່ເໝາະສົມແກ່ຜູ້ອື່ນ ເປັນຕົ້ນ ນັກກິລາ-ກາຍຍະກຳ ໃນເວລາສະແດງ, ແຂ່ງຂັນ.

## ພາກທີ VI
## ອົງການຄຸ້ມຄອງ ແລະ ກວດກາ ກິລາ-ກາຍຍະກຳ

### ໝວດທີ 1
### ການຄຸ້ມຄອງກິລາ-ກາຍຍະກຳແຫ່ງຊາດ

**ມາດຕາ 86. ອົງການຄຸ້ມຄອງກິລາ-ກາຍຍະກຳແຫ່ງຊາດ**

ລັດຖະບານ ຄຸ້ມຄອງ ກິລາ-ກາຍຍະກຳ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ເປັນໃຈກາງໃນການຄຸ້ມຄອງ ບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງກິລາ-ກາຍຍະກຳ ປະກອບດ້ວຍ :

- ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ;
- ພະແນກກິລາ-ກາຍະກຳ ແຂວງ, ນະຄອນ;
- ຫ້ອງການ ກິລາ-ກາຍຍະກຳ ເມືອງ, ເທດສະບານ.

**ມາດຕາ 87. ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ**

ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ມີຊື່ຫຍໍ້ວ່າ “ ຄກຊ ” ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງມະຫາພາກກ່ຽວກັບວຽກງານກິລາ-ກາຍຍະກຳ ໃນຂອບເຂດທົ່ວປະເທດ, ຄຸ້ມຄອງ ຊີ້ນຳ ແລະ ປະສານສົມທົບກັບຄະນະກຳມະການກິລາໂອແລມປິກ ແລະ ສະຫະພັນກິລາ-ກາຍຍະກຳແຫ່ງຊາດປະເພດຕ່າງໆ ໃນການເຄື່ອນໄຫວກິລາ-ກາຍຍະກຳ ພາຍໃນປະເທດ ແລະ ໃນເວທີສາກົນ.

**ມາດຕາ 88. ສິດ ແລະ ໜ້າທີ່ ຂອງຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ**

ໃນການຄຸ້ມຄອງວຽກງານກິລາ-ກາຍຍະກຳ ຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ, ແຜນການ ແລະ ໂຄງການພັດທະນາການກິລາ -ກາຍຍະກຳ ໃນຂອບເຂດທົ່ວປະເທດ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
2. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ລະບຽບກົດໝາຍ, ມະຕິຄຳສັ່ງຂອງລັດຖະບານ ກ່ຽວກັບວຽກງານກິລາ-ກາຍຍະກຳ;
3. ຊີ້ນຳການປັບປຸງ, ບູລະນະກົງຈັກການຈັດຕັ້ງຂອງຂະແໜງການ ກິລາ-ກາຍຍະກຳ ແຕ່ສູນກາງຮອດທ້ອງຖິ່ນ. ຄຸ້ມຄອງ, ກໍ່ສ້າງຖັນແຖວພະນັກງານ, ຄູຝຶກ, ກຳມະການຕັດສິນ, ນັກກິລາ-ກາຍຍະກຳປະເພດຕ່າງໆ ນັບທັງ ນັກກິລາ-ກາຍຍະກຳຄົນພິການ ຕາມລະບຽບກົດໝາຍ;
4. ແຕ່ງຕັ້ງ, ປັບປຸງ, ສັບຊ້ອນ, ເລືອກເຟັ້ນ, ຍົກຍ້າຍ, ປະຕິບັດນະໂຍບາຍຕໍ່ພະນັກງານ, ລັດຖະກອນ ແລະ ນັກກິລາ-ກາຍຍະກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ສ້າງສູນຝຶກກິລາ-ກາຍຍະກຳ, ສະໂມສອນ ແລະ ໂຮງຮຽນພອນສະຫວັນກິລາ-ກາຍຍະກຳລະດັບຊາດ;
6. ອະນຸມັດການຈັດຕັ້ງ ການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກຳ ປະເພດຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມຄວາມຮັບຜິດຊອບຂອງຕົນ;
7. ຄົ້ນຄວ້າ, ນຳສະເໜີຂໍອະນຸມັດຈາກລັດຖະບານ ເພື່ອການຈັດງານມະຫາກຳກິລາ-ກາຍຍະກຳແຫ່ງຊາດ, ເຂົ້າຮ່ວມງານມະຫາກຳກິລາຊີເກມ, ເອຊຽນເກມ, ໂອແລມປິກເກມ;
8. ສ້າງ, ຄຸ້ມຄອງ, ນຳໃຊ້ພື້ນຖານໂຄງລ່າງ, ສະຖານທີ່ຝຶກແອບ, ການແຂ່ງຂັນ, ພາຫະນະ, ອຸປະກອນກິລາ-ກາຍຍະກຳ, ງົບປະມານ ຂອງຕົນໃຫ້ມີປະສິດທິຜົນ, ພ້ອມກັນນັ້ນ ກໍປຸກລະດົມ, ຍາດແຍ່ງທຶນຮອນ ຈາກສັງຄົມ ທີ່ຖືກຕ້ອງຕາມກົດໝາຍ ເພື່ອພັດທະນາກິລາ-ກາຍຍະກຳ;
9. ຄົ້ນຄວ້າ, ວິໄຈ ວິທະຍາສາດ, ເຕັກນິກ, ຍຸດທະວິທີ, ການແພດ, ເກັບກຳຂໍ້ມູນ, ຂ່າວສານກ່ຽວກັບກິລາ-ກາຍຍະກຳ ແລະ ແນະນຳ, ເຜີຍແຜ່ໃຫ້ແກ່ສັງຄົມ ເປັນຕົ້ນ ຢູ່ ໂຮງຮຽນ, ສູນ ແລະ ສະຖາບັນກິລາ-ກາຍຍະກຳຕ່າງໆ;
10. ຊີ້ນຳ, ແນະນຳ, ເຜີຍແຜ່ ດ້ານວິຊາການໃຫ້ແກ່ຂະແໜງການກິລາ-ກາຍຍະກຳໃນທົ່ວປະເທດ;
11. ອະນຸມັດການສ້າງຕັ້ງ, ປັບປຸງ ຫຼື ຍົກເລີກ ສະໂມສອນ, ສະຫະພັນກິລາ-ກາຍຍະກຳລະດັບຊາດ;
12. ສະເໜີລັດຖະບານ ເພື່ອຮັບຮອງ ການສ້າງຕັ້ງ, ປັບປຸງ ຫຼື ຍົກເລີກ ຄະນະກຳມະການກິລາໂອແລມປິກແຫ່ງຊາດລາວ;
13. ເຊັນສັນຍາ, ອະນຸສັນຍາກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ, ການຮ່ວມມື ດ້ານວຽກງານກິລາ-ກາຍຍະກຳ ບົນພື້ນຖານການເຫັນດີຂອງລັດຖະບານ;
14. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ລາຍງານການປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ລັດຖະບານ ຢ່າງເປັນປົກກະຕິ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫລື ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 89. ພະແນກກິລາ-ກາຍຍະກຳ ແຂວງ, ນະຄອນ**

ພະແນກກິລາ-ກາຍຍະກຳ ແຂວງ, ນະຄອນ ເປັນເສນາທິການຂອງອົງການປົກຄອງແຂວງ, ນະຄອນ, ປະຕິບັດພາລະບົດບາດ ຄຸ້ມຄອງກິລາ-ກາຍຍະກຳໃນທົ່ວແຂວງ, ນະຄອນ ແລະ ພາຍໃຕ້ການຊີ້ນຳດ້ານວິຊາການຂອງຄະນະກຳມະການກິລາ-ກາຍຍະກຳແຫ່ງຊາດ.

**ມາດຕາ 90. ສິດ ແລະ ໜ້າທີ່ຂອງພະແນກການກິລາ-ກາຍຍະກຳ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານກິລາ-ກາຍຍະກຳ ພະແນກກິລາ-ກາຍຍະກຳ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ລະບຽບກົດໝາຍ, ຂໍ້ຕົກລົງ, ກົດລະບຽບ ແລະ ກະຕິກາ ກ່ຽວກັບການຄຸ້ມຄອງ ການພັດທະນາກິລາ-ກາຍຍະກຳ ຂອງຂັ້ນເທິງ;
2. ຄົ້ນຄວ້າ, ວາງແຜນການ, ໂຄງການພັດທະນາກິລາ-ກາຍຍະກຳ ພາຍໃນແຂວງ, ນະຄອນ ເພື່ອສະເໜີຕໍ່ຂັ້ນເທິງຂອງຕົນອະນຸມັດ ແລ້ວຈັດຕັ້ງປະຕິບັດ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ເພື່ອສະເໜີສ້າງຕັ້ງ, ປັບປຸງ ຫຼື ຍົກເລີກສະມາຄົມກິລາ-ກາຍຍະກຳພາຍໃນແຂວງ, ນະຄອນ ເພື່ອໃຫ້ຂັ້ນເທິງພິຈາລະນາ;
4. ອະນຸມັດການສ້າງຕັ້ງ, ປັບປຸງ ຫຼື ຍົກເລີກ ສະຫະພັນ, ສະໂມສອນກິລາ-ກາຍຍະກຳພາຍໃນແຂວງ, ນະຄອນ;
5. ສັບຊ້ອນ, ຍົກຍ້າຍ, ແຕ່ງຕັ້ງ, ປະຕິບັດນະໂຍບາຍຕໍ່ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫລື ສະເໜີຕໍ່ຂັ້ນເທິງ ເພື່ອພິຈາລະນາ;
6. ຊີ້ນຳ, ແນະນຳ, ເຜີຍແຜ່ ວິຊາການກິລາ-ກາຍຍະກຳ ໃຫ້ແກ່ຫ້ອງການກິລາ-ກາຍຍະກຳ ຂັ້ນເມືອງ, ຮາກຖານ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄັດເລືອກ, ຝຶກແອບ, ທົດສອບນັກກິລາ, ກໍ່ສ້າງ, ບຳລຸງດ້ານວິຊາການໃຫ້ແກ່ບຸກຄະລາກອນກິລາ ພ້ອມທັງ ຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນລະດັບຕ່າງໆ;
8. ຄຸ້ມຄອງ, ພັດທະນາ, ນຳໃຊ້ ພື້ນຖານໂຄງລ່າງ, ພາຫະນະ, ອຸປະກອນ, ການເງິນກິລາ-ກາຍຍະກຳຂັ້ນຂອງຕົນໃຫ້ມີປະສິດທິຜົນ ພ້ອມກັນນັ້ນ ກໍປຸກລະດົມ, ຍາດແຍ່ງທຶນຮອນ ຈາກສັງຄົມ ເພື່ອພັດທະນາກິລາ-ກາຍຍະກຳໃນທ້ອງຖິ່ນຂອງຕົນ;
9. ພົວພັນ, ຮ່ວມມືກັບຕ່າງປະເທດໃນວຽກງານກິລາ-ກາຍຍະກຳ ຕາມການມອບໝາຍຂອງຂັ້ນເທິງ;
10. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ລາຍງານການປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ຫລື ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 91. ຫ້ອງການກິລາ-ກາຍຍະກຳ ເມືອງ, ເທດສະບານ**

ຫ້ອງການກິລາ-ກາຍຍະກຳ ເມືອງ, ເທດສະບານ ເປັນເສນາທິການຂອງອົງການປົກຄອງເມືອງ, ເທດສະບານ, ປະຕິບັດພາລະບົດບາດຄຸ້ມຄອງກິລາ-ກາຍຍະກຳໃນທົ່ວເມືອງ, ເທດສະບານ ແລະ ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການຂອງພະແນກກິລາ-ກາຍຍະກຳຂັ້ນແຂວງ.

**ມາດຕາ 92. ສິດ ແລະ ໜ້າທີ່ ຂອງຫ້ອງການກິລາ-ກາຍຍະກຳ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານກິລາ-ກາຍຍະກຳ ຫ້ອງການກິລາ-ກາຍຍະກຳ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຈັດຕັ້ງປະຕິບັດແຜນການ, ລະບຽບກົດໝາຍ, ຂໍ້ຕົກລົງ, ກົດລະບຽບ ແລະ ກະຕິກາ ກ່ຽວກັບການຄຸ້ມຄອງ, ການພັດທະນາກິລາ-ກາຍຍະກຳ ທີ່ຂັ້ນເທິງວາງອອກ;
2. ຄົ້ນຄວ້າ, ວາງແຜນການ, ໂຄງການພັດທະນາ ກິລາ-ກາຍຍະກຳ ພາຍໃນເມືອງ, ເທດສະບານ ເພື່ອສະເໜີຕໍ່ຂັ້ນເທິງຂອງຕົນອະນຸມັດ ແລ້ວຈັດຕັ້ງປະຕິບັດ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ເພື່ອສະເໜີສ້າງຕັ້ງ, ປັບປຸງ ຫລື ຍົກເລີກ ສະໂມສອນກິລາ-ກາຍຍະກຳ ພາຍໃນເມືອງ, ເທດສະບານ ເພື່ອໃຫ້ຂັ້ນເທິງພິຈາລະນາ;
4. ອະນຸມັດການສ້າງຕັ້ງ, ປັບປຸງ ຫລື ຍົກເລີກ ໜ່ວຍກິລາ-ກາຍຍະກຳຮາກຖານ;
5. ສັບຊ້ອນ, ຍົກຍ້າຍ, ແຕ່ງຕັ້ງ, ປະຕິບັດນະໂຍບາຍຕໍ່ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫລື ສະເໜີຕໍ່ຂັ້ນເທິງ ເພື່ອພິຈາລະນາ;
6. ຊີ້ນຳ, ແນະນຳ, ເຜີຍແຜ່ ວິຊາການກິລາ-ກາຍຍະກຳໃຫ້ແກ່ສະໂມສອນ, ໜ່ວຍກິລາ-ກາຍຍະກຳ ຮາກຖານ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ຝຶກແອບ, ທົດສອບ ນັກກິລາ, ກໍ່ສ້າງ, ບຳລຸງ ດ້ານວິຊາການໃຫ້ແກ່ບຸກຄະລາກອນກິລາ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມການແຂ່ງຂັນລະດັບຕ່າງໆ;
8. ຄຸ້ມຄອງ, ພັດທະນາ, ນຳໃຊ້ ພື້ນຖານໂຄງລ່າງ, ພາຫະນະ, ອຸປະກອນ, ການເງິນກິລາ-ກາຍຍະກຳຂັ້ນຂອງຕົນໃຫ້ມີປະສິດທິຜົນ ພ້ອມກັນນັ້ນ ກໍປຸກລະດົມ, ຍາດແຍ່ງທຶນຮອນ ຈາກສັງຄົມ ເພື່ອພັດທະນາກິລາ-ກາຍຍະກຳ ໃນທ້ອງຖິ່ນຂອງຕົນ;
9. ຮຽກໂຮມປະຊຸມ, ເຂົ້າຮ່ວມປະຊຸມ, ສະຫລຸບ, ລາຍງານການປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບກົດໝາຍ ຫລື ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 2
## ການກວດກາກິລາ-ກາຍຍະກຳ

**ມາດຕາ 93. ອົງການກວດກາກິລາ-ກາຍຍະກຳ**

ອົງການກວດກາກິລາ-ກາຍຍະກຳ ແມ່ນອົງການດຽວກັນກັບອົງການຄຸ້ມຄອງກິລາ-ກາຍຍະກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 86 ຂອງກົດໝາຍສະບັບນີ້. ນອກຈາກນັ້ນຍັງມີອົງການກວດກາພາຍນອກ ຄື ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ການກວດກາຂອງອົງການຈັດຕັ້ງມະຫາຊົນ, ການຕິດຕາມກວດກາຂອງສະພາແຫ່ງຊາດ.

**ມາດຕາ 94. ເນື້ອໃນການກວດກາ**

ເນື້ອໃນການກວດກາ ກ່ຽວກັບ ກິລາ-ກາຍຍະກຳ ມີດັ່ງນີ້ :

1. ກວດກາການປະຕິບັດແຜນຍຸດທະສາດ, ນະໂຍບາຍ, ແຜນການ, ໂຄງການ, ລະບຽບກົດໝາຍ ກ່ຽວກັບກິລາ-ກາຍຍະກຳ;
2. ກວດກາການເຄື່ອນໄຫວຂອງການຈັດຕັ້ງ ກິລາ-ກາຍຍະກຳປະເພດຕ່າງໆ ເຊັ່ນ: ສະຫະພັນ, ສະມາຄົມ, ສະໂມສອນ ຕາມຄວາມຮັບຜິດຊອບ ແລະ ພາລະບົດບາດ ຂອງຕົນ;
3. ກວດກາການແກ້ໄຂຄຳສະເໜີຂອງບຸກຄົນ, ການຈັດຕັ້ງ ກ່ຽວກັບວຽກງານກິລາ-ກາຍຍະກຳ.

**ມາດຕາ 95. ຮູບການການກວດກາ**

ການກວດກາວຽກງານກິລາ-ກາຍຍະກຳ ມີສາມຮູບການ ດັ່ງນີ້ :

- ການກວດກາຕາມແຜນການປົກກະຕິ;
- ການກວດການອກແຜນການ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາແບບກະທັນຫັນ.

ການກວດກາຕາມແຜນການປົກກະຕິ ແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດການອກແຜນການ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງລ່ວງໜ້າໃຫ້ຜູ້ຖືກກວດກາ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 96. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 97. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫລື ດຳເນີນຄະດີ ຕາມກໍລະນີ ເບົາ ຫລື ໜັກ.

**ມາດຕາ 98. ມາດຕະການສຶກສາອົບຮົມ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ຮັບສາລະພາບຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 99. ມາດຕະການທາງວິໄນ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແຕ່ບໍ່ຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ໂດຍບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຕົນ;
2. ໂຈະທຸກການເຄື່ອນໄຫວໃນວຽກງານກິລາ-ກາຍຍະກຳ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ;
3. ປະຕິບັດວິໄນອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 100. ມາດຕະການປັບໃໝ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍເລັກໜ້ອຍ ຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 101. ມາດຕະການທາງແພ່ງ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ບຸກຄົນ ແລະ ການຈັດຕັ້ງອື່ນ ເນື່ອງມາຈາກການກະທຳ ທີ່ບໍ່ຖືກຕ້ອງຂອງຕົນ ກ່ຽວກັບວຽກງານກິລາ-ກາຍຍະກຳ ຈະຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 102. ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

## ພາກທີ VIII
## ວັນສ້າງຕັ້ງກິລາ-ກາຍຍະກຳແຫ່ງຊາດ, ເຄື່ອງໝາຍ ແລະ ເຄື່ອງແບບກິລາ-ກາຍຍະກຳ

**ມາດຕາ 103. ວັນສ້າງຕັ້ງກິລາ-ກາຍຍະກຳແຫ່ງຊາດ**

ສປປ ລາວ ຖືເອົາ ວັນທີ 22 ພະຈິກ 1985 ເປັນວັນສ້າງຕັ້ງກິລາ-ກາຍຍະກຳແຫ່ງຊາດ.

ແຕ່ລະປີ ຢູ່ສູນກາງ ແລະ ທ້ອງຖິ່ນ ຕ້ອງຈັດຕັ້ງການສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການຕ່າງໆ ທີ່ເໝາະສົມ.

**ມາດຕາ 104. ເຄື່ອງໝາຍກິລາ-ກາຍຍະກຳ**

ເຄື່ອງໝາຍກິລາ-ກາຍຍະກຳ ເປັນຮູບທອນໄຟ, ສີແດງກວມທົ່ວນາກສີຄຳ, ມີສັນຍາລັກທາງແລ່ນ ຢູ່ເບື້ອງລຸ່ມ, ມີໜັງສືພາສາສາກົນ “ Laos ” .

**ມາດຕາ 105. ເຄື່ອງແບບກິລາ-ກາຍຍະກຳ**

ເຄື່ອງແບບກິລາ-ກາຍຍະກຳ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 106. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 107. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດພາຍຫລັງ ເກົ້າສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**